ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ 0619/ຜ-ຟຟລ
ນະຄອນຫຼວງວຽງຈັນ, ວັນທີ 25 ມີນາ 2019

ໜັງສືແຈ້ງເຊີນ

ຮຽນ: ທ່ານຜູ້ຖືຮຸ້ນ ຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລື່ອງ: ເຊີນເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2018

- ອີງຕາມມະຕິຕົກລົງ ຂອງກອງປະຊຸມສະພາບໍລິຫານສະໄໝວິສາມັນ ຄັ້ງທີ 1/2019 ຂອງ ບໍລິສັດ ຜະລິດ-ໄຟຟ້າ ລາວ ມະຫາຊົນ, ວັນທີ 07 ກຸມພາ 2019;
- ອີງຕາມມະຕິຕົກລົງ ຂອງກອງປະຊຸມສະພາບໍລິຫານສະໄໝສາມັນຄັ້ງທີ 1/2019 ຂອງ ບໍລິສັດ ຜະລິດ-ໄຟຟ້າ ລາວ ມະຫາຊົນ, ວັນທີ 18 ມີນາ 2019.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ("**ບໍລິສັດ**") ຂໍຖືເປັນກຽດຮຽນເຊີນທ່ານເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2018 ໃນວັນທີ **09 ເມສາ 2019** ເວລາ **15:00** ໂມງ (ເລີ້ມລົງທະບຽນເວລາ **13:00** ໂມງ), ທີ່ຫ້ອງປະຊຸມຊັ້ນ 1, ອາຄານສຳນັກງານໃຫຍ່ ຂອງລັດວິສາຫະກິດໄຟຟ້າລາວ, ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ. ບໍລິສັດໄດ້ແຈ້ງວັນ, ເວລາ ແລະວາລະກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2018 ຜ່ານເວັບໄຊທ໌ຂອງບໍລິສັດ (www.edlgen.com.la) ແລະ ລະບົບຂໍ້ມູນຂ່າວສານຂອງຕະຫຼາດຫຼັກຊັບລາວ (www.lsx.com.la).

ກຳນົດວັນທີປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນ ໃນການເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2018, ໃນວັນທີ **01 ມີນາ 2019**, ຊຶ່ງໄດ້ເປີດເຜີຍໃຫ້ບັນດາທ່ານຊາບແລ້ວ.

ຫວັງວ່າທ່ານຄົງສະຫຼະເວລາອັນມີຄ່າ ເຂົ້າຮ່ວມກອງປະຊຸມຄັ້ງນີ້ດ້ວຍ.

ດ້ວຍຄວາມນັບຖືເປັນຢ່າງສູງ,
ປະທານສະພາບໍລິຫານ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ EDL-Generation Public Company

ປອ. ຄຳມະນີ ອິນທິລາດ

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປລາວ. ຕ.ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌:www.edlgen.com.la

<u>ເອກະສານຄັດຕິດ:</u>

1. ວາລະກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2018.
2. ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2017.
3. ລາຍງານການເງິນປະຈຳປີ 2018
4. ໃບມອບສັນທະ.
5. ເອກະສານ ແລະ ຫຼັກຖານທີ່ຜູ້ເຂົ້າຮ່ວມກອງປະຊຸມຕ້ອງໃຊ້ເພື່ອການສະເໜີໂຕໃນການເຂົ້າຮ່ວມກອງປະຊຸມ, ການມອບໝາຍ, ການລົງທະບຽນ ແລະການລົງຄະແນນສຽງໃນກອງປະຊຸມຜູ້ຖືຮຸ້ນ.
6. ແຜນທີ່ຂອງສະຖານທີ່ຈັດກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2018.

<u>ໝາຍເຫດ</u>:

1. ຜູ້ຖືຮຸ້ນທຸກໆທ່ານ ຕ້ອງໄປຮັບເອົາໜັງສືເຊີນປະຊຸມພ້ອມເອກະສານຄັດຕິດຕ່າງໆ ເລີ່ມແຕ່ວັນທີ **26 ມີນາ 2019**, ຢູ່ຕະຫຼາດຫຼັກຊັບລາວ ຊັ້ນ 4 ພະແນກຊຳລະສະສາງ ແລະ ຮັບຝາກຫຼັກຊັບ, ບ້ານໂພນທັນເໜືອ, ຖະໜົນ T4, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ເລກໂທລະສັບ: (856-21) 454361-4, ແຟັກ: (856-21) 454 361-4.
2. ສຳລັບຜູ້ຖືຮຸ້ນທີ່ຈະເຂົ້າຮ່ວມປະຊຸມດ້ວຍຕົນເອງກະລຸນານຳບັດປະຈຳຕົວ ຫຼືໜັງສືຜ່ານແດນ (ສຳລັບຜູ້ຖືຮຸ້ນຄົນຕ່າງປະເທດ) ມາໃນວັນປະຊຸມ ເພື່ອສະເໜີໂຕເຂົ້າຮ່ວມກອງປະຊຸມ.
3. ສຳລັບຜູ້ຖືຮຸ້ນທີ່ຈະໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງແທນ, ກະລຸນາປະກອບຂໍ້ມູນແລະລົງລາຍເຊັນໃນໃບມອບສັນທະ ຕາມ **<u>ເອກະສານຄັດຕິດ</u>** 4 ທີ່ໄດ້ຄັດຕິດມາພ້ອມນີ້ໃຫ້ຖືກຕ້ອງຄົບຖ້ວນ.
4. ສຳລັບຜູ້ຕາງໜ້າທີ່ຈະເຂົ້າຮ່ວມປະຊຸມຈະຕ້ອງນຳເອກະສານ ຫຼືຫຼັກຖານ ເພື່ອສະເໜີໂຕເຂົ້າຮ່ວມກອງປະຊຸມຕາມລາຍລະອຽດທີ່ໄດ້ລະບຸໄວ້ໃນ **<u>ເອກະສານຄັດຕິດ</u>** 5 ທີ່ໄດ້ຄັດຕິດມາພ້ອມນີ້ ແລະ ສິ່ງມອບໃຫ້ປະທານໃນກອງປະຊຸມ ແລະ/ຫຼື ຜູ້ທີ່ໄດ້ຮັບມອບໝາຍຈາກປະທານ, ຜູ້ຕາງໜ້າຈຶ່ງເຂົ້າຮ່ວມກອງປະຊຸມໄດ້.
5. ໃນກໍລະນີທີ່ຜູ້ຖືຮຸ້ນຈະມອບໝາຍໃຫ້ຜູ້ອຳນວຍການ ຂອງບໍລິສັດເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງແທນ, ກະລຸນາປະກອບຂໍ້ ມູນແລະລົງລາຍເຊັນໃນໃບມອບສັນທະ ແລະ ໝາຍ **(✔)** ເພື່ອເລືອກເອົາຜູ້ອຳນວຍການຂອງບໍລິສັດທ່ານໃດໜຶ່ງເປັນຜູ້ຕາງໜ້າ ແລະສົ່ງໃບມອບສັນທະດັ່ງກ່າວພ້ອມເອກະສານປະກອບສົ່ງເຖິງ ບໍລິສັດ ເຫ ເລ-ໄຟຟ້າລາວ ມະຫາຊົນ, ຊັ້ນ 7, **ພະແນກເລຂານຸການບໍລິສັດ**, ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ.2392. ແລະ **ກະລຸນາສົ່ງເຖິງບໍລິສັດກ່ອນວັນທີ 09 ເມສາ 2019**.
6. ຖ້າຫາກທ່ານມີຂໍ້ສົງໄສ ຫຼືຄຳຖາມກ່ຽວກັບການມອບສັນທະ, ທ່ານສາມາດສອບຖາມ ທ່ານ ນາງ ໂພຄົນ ອັບໄພ ໂທ: (856-20) 54 549 978, ແລະ ທ່ານ ບຸນເກີດ ໄຊຍະສອນ ໂທ: (856-20) 22 248 202 ໃນໂມງລັດຖະການ.

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌:www.edlgen.com.la

ວາລະທີ 1. ລາຍງານຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີຜ່ານມາ.

ລາຍລະອຽດ:

ລາຍງານຜົນການຈັດຕັ້ງປະຕິບັດ ມະຕິກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີຄັ້ງຜ່ານມາ ເພື່ອໃຫ້ຜູ້ຖືຮຸ້ນ ຮັບຊາບເຖິງຜົນສຳເລັດ ການຈັດຕັ້ງປະຕິບັດມະຕິກອງປະຊຸມດັ່ງກ່າວ.

I. ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2017

1. ກ່ຽວກັບວາລະທີ 1,2,3,4,5,6,7,9 ແມ່ນໄດ້ຈັດຕັ້ງປະຕິບັດຕາມແຜນການເຫັນດີ ຂອງປະຊຸມສາມັນຜູ້ຖືຮຸ້ນແລ້ວ.
2. ກ່ຽວກັບວາລະທີ 8 ແມ່ນກຳລັງຢູ່ໃນໄລຍະການຈັດຕັ້ງປະຕິບັດ, ເນື່ອງຈາກເປັນແຜນພັດທະນາທຸລະກິດ ຂອງບໍລິສັດ ຈາກປີ 2016-2025.

ຄຳເຫັນຂອງສະພາບໍລິຫານ:

ລາຍງານການຈັດຕັ້ງປະຕິບັດມະຕິກອງປະຊຸມສາມັນຜູ້ຖືຮຸ້ນປີຜ່ານມາ ແມ່ນລາຍງານໃຫ້ຜູ້ຖືຮຸ້ນຮັບ ຊາບເທົ່ານັ້ນ, ໂດຍວາລະນີ້ແມ່ນບໍ່ມີການລົງຄະແນນສຽງ.

ວາລະທີ 2. ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2017.

ລາຍລະອຽດ:

ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2017 ໄດ້ຈັດຂຶ້ນໃນວັນທີ **06 ເມສາ 2018**, ຊຶ່ງບໍລິສັດໄດ້ມີ ການບັນທຶກກອງປະຊຸມດັ່ງກ່າວ ມີລາຍລະອຽດໃນ **ເອກະສານຄັດຕິດ 2** ທີ່ໄດ້ຄັດຕິດມາພ້ອມນີ້.

ຄຳເຫັນຂອງສະພາບໍລິຫານ:

ບົດບັນທຶກກອງປະຊຸມ ມີຄວາມຖືກຕ້ອງ ແລະ ຄົບຖ້ວນແລ້ວ ເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະນາຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2017, ວັນທີ 06 ເມສາ 2018.

ຄະແນນສຽງທີ່ຕ້ອງໃຊ້:

ກົດໝາຍວ່າດ້ວຍວິສາຫະກິດ ໄດ້ກຳນົດໄວ້ວ່າ ວາລະນີ້ ຕ້ອງຜ່ານມະຕິດ້ວຍຄະແນນສຽງຫລາຍກວ່າ ເຄິ່ງໜຶ່ງ ຂອງ ຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 3. ພິຈາລະນາ ແລະ ຮັບຮອງລາຍງານການເງິນ 6 ເດືອນຕົ້ນປີ 2018 (01/01/2018-30/06/2018) ແລະ ການຈ່າຍເງິນປັນຜົນຈາກການດຳເນີນທຸລະກິດ 6 ເດືອນຕົ້ນປີ 2018.

ລາຍລະອຽດ:

ອີງຕາມການມອບອຳນາດ ຈາກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2012 ຄັ້ງວັນທີ 22 ເມສາ 2013. ການເຄື່ອນໄຫວທຸລະກິດ ຂອງບໍລິສັດໃນ 6 ເດືອນຕົ້ນປີ 2018 ມີກຳໄລທັງໝົດປະມານ **95,39** ຕື້ກີບ, ຊຶ່ງ ຜູ້ກວດສອບພາຍນອກໄດ້ມີການທົບທວນແລ້ວ ແລະ ບໍລິສັດໄດ້ເປີດເຜີຍລາຍງານດັ່ງກ່າວ ໃນເວັບໄຊທ໌ ຂອງ ຕະຫລາດຫລັກຊັບລາວ ແລະ ເວັບໄຊທ໌ຂອງບໍລິສັດ.

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌:www.edlgen.com.la

ບໍລິສັດໄດ້ຈ່າຍເງິນປັນຜົນ 6 ເດືອນຕົ້ນປີ 2018 ໃຫ້ຜູ້ຖືຮຸ້ນທີ່ມີລາຍຊື່ໃນປຶ້ມບັນຊີຜູ້ຖືຮຸ້ນ ທີ່ໄດ້ກຳນົດສິດຂອງຜູ້ຖືຮຸ້ນໃນການໄດ້ຮັບເງິນປັນຜົນ ໃນວັນທີ **19 ກັນຍາ 2018** ໃນອັດຕາ **110** ກີບຕໍ່ຮຸ້ນ, ລວມເງິນປັນຜົນທີ່ຈ່າຍທັງໝົດປະມານ **184,72** ຕື້ກີບ ແລະ ໄດ້ຈ່າຍເງິນປັນຜົນດັ່ງກ່າວໃຫ້ຜູ້ຖືຮຸ້ນ ໃນວັນທີ **03 ຕຸລາ 2018** .

ຄຳເຫັນຂອງສະພາບໍລິຫານ:

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະນາຮັບຮອງເອົາລາຍງານການເງິນ 6 ເດືອນຕົ້ນປີ 2018 ແລະ ການຈ່າຍເງິນປັນຜົນຈາກການດຳເນີນທຸລະກິດ 6 ເດືອນຕົ້ນປີ 2018.

ຄະແນນສຽງທີ່ຕ້ອງໃຊ້:

ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ ຕ້ອງຜ່ານມະຕິດ້ວຍຄະແນນສຽງຫລາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 4. ພິຈາລະນາ ແລະ ຮັບຮອງບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດ ປີ 2018 ລວມທັງລາຍງານການເງິນຂອງບໍລິສັດ ປີ 2018 ແລະ ແຜນການດຳເນີນທຸລະກິດຂອງບໍລິສັດປີ 2019.

ລາຍລະອຽດ:

I. ລາຍງານຜົນການດຳເນີນທຸລະກິດຂອງບໍລິສັດປີ 2018

ການດຳເນີນທຸລະກິດ ຂອງ ຜ-ຟຟລ ໃນປີ 2018 ແມ່ນໄດ້ຜະລິດກະແສໄຟຟ້າຂາຍຍົກໃຫ້ລັດວິສາຫະກິດໄຟຟ້າລາວ ຕາມສັນຍາຊື້-ຂາຍໄຟຟ້າ ແລະ ດຳເນີນການຕາມກົດໝາຍ ແລະ ກົດລະບຽບຕ່າງໆ ຂອງບໍລິສັດ ມະຫາຊົນ ທີ່ຈົດທະບຽນໃນຕະຫລາດຫລັກຊັບລາວ, ໄດ້ເຂົ້າໄປຖືຮຸ້ນໃນ 5 ເຂື່ອນຜູ້ຜະລິດໄຟຟ້າເອກະລາດ. ມີທຶນຈົດທະບຽນຈຳນວນ 6.717.214.788.000 ກີບ, ຄິດເປັນຮຸ້ນສາມັນເທົ່າກັບ 1.679.303.697 ຮຸ້ນ; ຊຶ່ງຜົນການດຳເນີນທຸລະກິດໃນປີ 2018 ສາມາດສັງລວມໄດ້ດັ່ງນີ້:

1. ການຜະລິດ:

ໃນການດຳເນີນທຸລະກິດປີ 2018, ດ້ວຍກຳລັງການຜະລິດທັງໝົດ 1.131 MW, ໃນນີ້ ກຳລັງການຜະລິດທີ່ ຜ-ຟຟລ ຄຸ້ມຄອງ 100% ມີກຳລັງການຜະລິດ 619 MW ແລະ ກຳລັງການຜະລິດ ທີ່ ຜ-ຟຟລ ເຂົ້າຖືຮຸ້ນໃນ 5 ເຂື່ອນຜູ້ຜະລິດໄຟຟ້າເອກະລາດ ມີກຳລັງການຜະລິດ 512 MW (ຕາມຊັດສ່ວນການຖືຮຸ້ນ). ໃນປີ 2018 ນີ້, ເຂື່ອນທີ່ ຜ-ຟຟລ ຄຸ້ມຄອງ 100% ສາມາດຜະລິດກະແສໄຟຟ້າທັງໝົດ 2.385,34 GWh ແລະ ການຜະລິດຈາກ 5 ເຂື່ອນຜູ້ຜະລິດໄຟຟ້າເອກະລາດ ທີ່ ຜ-ຟຟລ ເຂົ້າຖືຮຸ້ນ ສາມາດຜະລິດກະແສໄຟຟ້າທັງໝົດ 2.696,53 GWh (ຕາມຊັດສ່ວນການຖືຮຸ້ນ), ລວມການຜະລິດທັງໝົດໃນປີປະຕິບັດໄດ້ 5.081,87 GWh.

2. ລາຍຮັບ:

ລາຍຮັບສ່ວນໃຫຍ່ ຂອງ ຜ-ຟຟລ ແມ່ນມາຈາກການຈຳໜ່າຍກະແສໄຟຟ້າໃຫ້ ຟຟລ, ຊຶ່ງໃນປີ 2018, ຜ-ຟຟລ ສາມາດສ້າງລາຍຮັບໄດ້ 1.143,34 ຕື້ກີບ.

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປລາວ. ຕູ້ ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌:www.edlgen.com.la

3. ລາຍຈ່າຍ:

ຜ-ຟຟລ ມີລາຍຈ່າຍທັງໝົດໃນການດຳເນີນທຸລະກິດຈຳນວນ 1.689,10 ຕື້ກີບ.

4. ການມອບພັນທະໃຫ້ລັດ:

ຜ-ຟຟລ ໄດ້ມອບພັນທະໃຫ້ລັດຖະບານ ໃນປີ 2018 ປະກອບມີຄ່າພາກຫຼວງ 1%, ຂອງລາຍຮັບຈາກການຂາຍກະແສໄຟຟ້າ, ອາກອນກຳໄລ 10%, ອາກອນເງິນປັນຜົນ 10% ແລະ ອາກອນລາຍໄດ້ຂອງບຸກຄົນ ລວມທັງໝົດ 119,91 ຕື້ກີບ.

5. ກຳໄລ:

ລວມກຳໄລສຸດທິຈາກການດຳເນີນທຸລະກິດໃນປີ 2018 ເທົ່າກັບ 74,79 ຕື້ກີບ.

6. ດ້ານບຸກຄະລາກອນ ແລະການພັດທະນາຊັບພະຍາກອນມະນຸດ:

ຈຳນວນພະນັກງານ ຂອງ ຜ-ຟຟລ ມີທັງໝົດ 689 ຄົນ, ໃນນີ້ຍິງ 118 ຄົນ, ໃນປີ 2018 ໄດ້ສົ່ງໄປຝຶກອົບຮົມໄລຍະສັ້ນພາຍໃນ ແລະຕ່າງປະເທດ ມີທັງໝົດ 609 ເທື່ອຄົນ.

7. ກິດຈະກຳສຳຄັນພາຍໃນປີ ດ້ານສັງຄົມ ແລະ ສິ່ງແວດລ້ອມ:

1) ຄະນະນຳຈາກສູນກາງ, ຄະນະນຳຈາກ ກະຊວງພະລັງງານ ແລະ ບໍ່ແຮ່, ປະທານສະພາບໍລິຫານ ຜ-ຟຟລ ໄດ້ລົງໃກ້ສິດຕິດແທດ ແລະ ຊີ້ນຳໂດຍກົງໃນການບໍລິຫານນ້ຳ ແລະ ການແກ້ໄຂບັນຫານ້ຳຖ້ວມທີ່ແຂວງວຽງຈັນ ເພື່ອຊ່ວຍບັນເທົາທຸກທາງດ້ານສັງຄົມ ແລະ ແກ້ໄຂບັນຫາສິ່ງແວດລ້ອມຂອບເຂດອ່າງໂຕ່ງນ້ຳງື່ມ-1 ແລະ ໄດ້ມອບເງິນອຸປະຖຳແນວພັນພືດໃຫ້ແກ່ ກະຊວງກະສິກຳ ແລະ ປ່າໄມ້ ຈຳນວນ 3 ຕື້ກີບ ແລະ ມອບເງິນຊ່ວຍເຫລືອໄພພິບັດນ້ຳຖ້ວມຄັ້ງນີ້ຈຳນວນໜຶ່ງ.

2) ໄດ້ປັບປຸງສາລະຄະດີ ໃນການດຳເນີນງານ ຂອງ ຜ-ຟຟລ ປະຈຳປີ 2018 (ພາສາລາວ ແລະ ອັງກິດ) ສາລະຄະດີເຂື່ອນໄຟຟ້າເຊເສັດ 1-2, ເຂື່ອນໄຟຟ້າເຊເສັດ 3, ເຂື່ອນໄຟຟ້າເຊລະນ້ຳ ແລະ ເຂື່ອນໄຟຟ້ານ້ຳຄານ 2 (ພາສາລາວ ແລະ ອັງກິດ) ຈຸດປະສົງແມ່ນເພື່ອໄວ້ໄປສະແດງໃນການສະເໜີຂໍ້ມູນຕ່າງໆຂອງບໍລິສັດໃຫ້ກັບພາກສ່ວນຕ່າງໆໄດ້ຮັບຮູ້ ແລະ ໃຫ້ແຂກທີ່ເຂົ້າມາຢ້ຽມຢາມໄດ້ຮັບຊົມ.

3) ຮ່ວມເປັນຜູ້ປະສານງານຫຼັກຮ່ວມກັບ 3 ອົງການຈັດຕັ້ງມະຫາຊົນ ຂອງ ຜ-ຟຟລ ໃນການລະດົມທຶນ ແລະ ວັດຖຸປັດໃຈໃນການຊ່ວຍເຫຼືອຜູ້ປະສົບໄພຈາກເຫດໄຟໄໝ້ ບ້ານ ສັນແຝນ, ເມືອງ ຄຳ, ແຂວງ ຊຽງຂວາງ.

4) ປະສານງານ ແລະ ຄົ້ນຄວ້າເອກະສານເພື່ອເຂົ້າຄັດເລືອກຮັບລາງວັນໃນສາຂາຕ່າງໆ ຂອງ ຜ-ຟຟລ ເປັນຕົ້ນ ແມ່ນ: ລາງວັນ Green leadership ໃນງານ Asia Responsible Enterprise Award (AREA) 2018 ແລະ ລາງວັນບໍລິສັດດີເດັ່ນ ລະດັບອາຊີ Asia Corporate Excellenge Sustainability Awards “ACES Award 2018”

5) ໃນລະຫວ່າງ ວັນທີ14-17 ສິງຫາ 2018 ໄດ້ຈັດສຳມະນາທອນຄືນວຽກງານສື່ສານອົງກອນ ແລະ ວຽກງານສິ່ງແວດລ້ອມສັງຄົມ ໃຫ້ກັບພະນັກງານປະຈຳແຕ່ລະເຂື່ອນທີ່ຂຶ້ນກັບ ຜ-ຟຟລ ທີ່ເຂື່ອນໄຟຟ້ານ້ຳມັງ 3.

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌:www.edlgen.com.la

6) ສືບຕໍ່ສ້າງປົດພັນທະສິ່ງແວດລ້ອມ (SESO) ຂອງເຂື່ອນໄຟຟ້ານ້ຳຄານ 2 ແລະ ເຂື່ອນໄຟຟ້າຫ້ວຍລຳພັນ ໃຫຍ່, ຈາກນັ້ນ ໄດ້ມີການດຳເນີນການຈັດຕັ້ງປະຕິບັດ ຕາມແຜນຄຸ້ມຄອງອ່າງຮັບນ້ຳ ແລະ ແຜນຄຸ້ມຄອງ ປ່າໄມ້ເຂດອ່າງຮັບນ້ຳ.

7) ໃນທ້າຍເດືອນ ພຶດສະພາ ປີ 2018 ໄດ້ມີການຈັດກິດຈະກຳການປູກຕົ້ນໄມ້ ແລະ ປ່ອຍປາ ພ້ອມທັງມອບ ເຄື່ອງນຸ່ງ ແລະ ອຸປະກອນການຮຽນ, ອຸປະກອນກິລາ ໃຫ້ແກ່ນ້ອງໆນັກຮຽນ ຢູ່ທີ່ເຂື່ອນໄຟຟ້າຫ້ວຍລຳພັນ ໃຫຍ່ (ເມືອງ ທ່າແຕງ, ແຂວງ ເຊກອງ).

8) ໄດ້ມີການມອບເງິນຈຳນວນ 10.000 ໂດລາສະຫະລັດ ເຂົ້າກອງທຶນປົກປັກຮັກສາສິ່ງແວດລ້ອມ, ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຕາມສັນຍາສຳປະທານຂອງ 7 ເຂື່ອນ.

9) ປະກອບສ່ວນໃນວຽກງານຄຸ້ມຄອງປົກປັກຮັກສາປ່າສະຫງວນແຫ່ງຊາດ ຈຳນວນ 100 ລ້ານກີບ ໃຫ້ແກ່ ປ່າ ສະຫງວນແຫ່ງຊາດພູເຂົາຄວາຍ.

10) ຜ-ຟຟລ ໄດ້ລະດົມທຶນຮ່ວມກັບ 3 ອົງການຈັດຕັ້ງພາຍໃນອົງກອນ ແລະ ໄດ້ລົງໄປພື້ນທີ່ຢ້ຽມຢາມ ແລະ ຊ່ວຍເຫຼືອບັນເທົາທຸກ ປະຊາຊົນທີ່ປະສົບໄພນ້ຳຖ້ວມ ທີ່ເມືອງ ສະໜາມໄຊ, ແຂວງ ອັດຕະປື.

8. ການລົງທຶນ ແລະ ການພັດທະນາທຸລະກິດ

ໃນວັນທີ 20 ມິຖຸນາ 2018, TRIS RATING ຈັດອັນດັບເຄດິດຮຸ້ນກູ້ບໍ່ດ້ອຍສິດ ບໍ່ມີຫລັກຊັບຄ້ຳ ປະກັນວົງເງິນບໍ່ເກີນ 17.500 ລ້ານບາດ “EDL-GEN” ທີ່ລະດັບ “BBB+/NEGATIVE”

8.1 ການລົງທຶນຮ່ວມກັບ ຟຟລ

1) ວັນທີ 26 ມີນາ 2018 ໄດ້ສຳເລັດການລົງນາມສັນຍາ ໂອນຮຸ້ນໂຄງການເຂື່ອນໄຟຟ້ານ້ຳແບ່ງ ແລະ ໂຄງການເຂື່ອນໄຟຟ້ານ້ຳລອງ ລະຫວ່າງ ຟຟລ ແລະ ຜ-ຟຟລ.
2) ວັນທີ 11 ມິຖຸນາ 2018 ໄດ້ສຳເລັດການລົງນາມສັນຍາໂອນຮຸ້ນໂຄງການເຂື່ອນໄຟຟ້າດອນສະ ໂຮງ ແລະ ໄຊຍະບູລີ ລະຫວ່າງ ຟຟລ ແລະ ຜ-ຟຟລ.

8.2 ການລົງທຶນໃນບໍລິສັດບໍລິການຄຸ້ມຄອງການຜະລິດ ແລະ ບຳລຸງຮັກສາ ອີດີແອນເຈັນ ຈຳກັດ

ບໍລິສັດບໍລິການຄຸ້ມຄອງການຜະລິດ ແລະບຳລຸງຮັກສາ ອີດີແອນເຈັນ ຈຳກັດ (EDL-GEN O&M) ໄດ້ຖືກສ້າງຕັ້ງໃນວັນທີ 14/12/2017, ເປັນບໍລິສັດລູກຂອງບໍລິສັດ EDL-GEN, ໃນການລົງທຶນ 100% ຂອງ ບໍລິສັດ EDL-GEN ເຊິ່ງໃຫ້ການສະໜັບສະໜູນທາງດ້ານງົບປະມານ, ວິຊາການ ແລະ ເຄື່ອງມືອຸປະກອນຕ່າງໆ, ຊຶ່ງ ມີຈຸດປະສົງດັ່ງລຸ່ມນີ້:

- ໃຫ້ບໍລິການໃນດ້ານການຄຸ້ມຄອງ ແລະ ບຳລຸງຮັກສາເຂື່ອນຕ່າງໆ
- ໃຫ້ບໍລິການການສ້ອມແປງເຄື່ອງຈັກຂະໜາດນ້ອຍ ແລະ ຂະໜາດໃຫຍ່ຢູ່ພາຍໃນເຂື່ອນ ແລະ ສະຖານີ
- ໃຫ້ບໍລິການສະໜອງວິຊາການ, ວິສາວະກອນ, ຜູ້ຊ່ຽວຊານໃຫ້ກັບເຂື່ອນຕ່າງໆ ແລະ ສະຖານີ
- ເຂົ້າຮ່ວມການລົງທຶນກັບບໍລິສັດພາຍໃນປະເທດ ແລະ ບໍລິສັດ ຢູ່ຕ່າງປະເທດ

ປະຈຸບັນບໍລິສັດ EDL-GEN O&M, ໄດ້ສຳເລັດການກະກຽມວິຊາການ ທີ່ມີຄຸນວຸດທິ, ມີຄວາມຮູ້ ຄວາມສາມາດທີ່ແນ່ນອນ, ເພື່ອປະກອບໃຫ້ໂຄງການເຂື່ອນໄຟຟ້າດອນສະໂຮງ ແລະເຂື່ອນໄຟຟ້ານ້ຳລີກ 1. ສືບຕໍ່

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌:www.edlgen.com.la

ກະກຽມວິຊາການໃຫ້ໂຄງການກໍ່ສ້າງເຂື່ອນນ້ຳເທີນ1 ແລະ ມີແຜນການລົງໄປຫາລູກຄ້າເປົ້າໝາຍ, ໂດຍສະເພາະເຂື່ອນ IPP, ທີ່ຢູ່ໃນໄລຍະກໍ່ສ້າງ, ເຂື່ອນ IPP ທີ່ຢູ່ໃນໄລຍະການເຮັດ Operation/ Maintenance ແລະ ເຂື່ອນ IPP ທີ່ຈະໄດ້ໝົດສັນຍາສຳປະທານ, ເພື່ອໃຫ້ຮັບຮູ້ບໍລິສັດ EDL-GEN O&M ກ່ຽວກັບຄວາມສາມາດໃນການໃຫ້ບໍລິການຄຸ້ມຄອງ ແລະ ບຳລຸງຮັກສາ, ຊອກຮູ້ຄວາມຕ້ອງການຂອງລູກຄ້າ ເພື່ອມາເປັນຂໍ້ມູນໃນການເຮັດ Proposal ໃນຄັ້ງຕໍ່ໄປ.

- ສຳເລັດການສ້າງຕັ້ງບໍລິສັດ E&E engineering and service company limited, ເຊິ່ງມີທຶນຈົດທະບຽນ 8 ຕື້ກີບ, ຊຶ່ງເປັນບໍລິສັດຮ່ວມຮຸ້ນລະຫວ່າງ ບໍລິສັດ EDL-GEN, ຖືຮຸ້ນ 60% ແລະ ບໍລິສັດ ESCO, ຖືຮຸ້ນ 40%

ການສ້າງຕັ້ງບໍລິສັດດັ່ງກ່າວແມ່ນເພື່ອໃຫ້ບໍລິການດ້ານການຄຸ້ມຄອງການຜະລິດ ແລະ ບຳລຸງຮັກສາ ໃຫ້ແກ່ໂຮງໄຟຟ້າປະເພດຕ່າງໆ ແລະ ເຂື່ອນໄຟຟ້າພະລັງງານນ້ຳ, ໃຫ້ບໍລິການທາງດ້ານບຳລຸງຮັກສາ-ສ້ອມແປງ ແລະ ໃຫ້ບໍລິການຈັດຝຶກອົບຮົມ ກ່ຽວກັບອຸປະກອນຕ່າງໆທີ່ຢູ່ພາຍໃນເຂື່ອນ ແລະ ສະຖານີ.

8. ການລະດົມທຶນ:

ໃນວັນທີ 2/1/2018 ຜ-ຟຟລ ໄດ້ກູ້ຍືມເງິນຈາກທະນາຄານອຸດສະຫະກຳແລະການຄ້າແຫ່ງ ສ.ປ ຈີນ (ICBC) (ສາຂານະຄອນຫລວງວຽງຈັນ) ມູນຄ່າ 40 ລ້ານໂດລາສະຫະລັດ ໄລຍະເວລາກູ້ຍືມ 3 ປີ ດ້ວຍອັດຕາດອກເບ້ຍລອຍຕົວຄື 6 m Libor + 3,20% ເພື່ອນຳໃຊ້ເຂົ້າໃນທຶນໝຸນວຽນ ຂອງ ບໍລິສັດ; ວັນທີ 22/12/2017 ໄດ້ເຊັນສັນຍາເງິນກູ້ຈາກທະນາຄານຫວຽດຕິນ (ສາຂານະຄອນຫລວງວຽງຈັນ) ມູນຄ່າ 23 ລ້ານໂດລາສະຫະລັດ ເຊິ່ງເປັນການກູ້ຍືມແບບໝຸນວຽນ Revolving Loan ໄລຍະຮັກສາວົງເງິນກູ້ 12 ເດືອນ ແລະ ເງິນກູ້ແຕ່ລະບ້ວງແມ່ນມີໄລຍະເວລາ 6 ເດືອນ ອັດຕາດອກເບ້ຍ 4,50% ເພື່ອນຳໃຊ້ເຂົ້າໃນທຶນໝຸນວຽນ ຂອງ ບໍລິສັດ (27/12/2018 ມື້ເບີກຖອນບ້ວງທຳອິດ).

ໃນປີ 2018 - 2019 ຜ-ຟຟລ ໄດ້ອອກຈຳໜ່າຍຮຸ້ນກູ້ສະກຸນເງິນບາດ (ບໍ່ມີຫລັກປະກັນ) ທີ່ປະເທດໄທ ມູນຄ່າ 17.500 ລ້ານບາດ ເພື່ອນຳໄປຊື້ເອົາຮຸ້ນ ຂອງ ຟຟລ ໃນໂຄງການເຂື່ອນໄຟຟ້າໄຊຍະບູລີ ຈຳນວນ 20% ແລະ ເຂື່ອນໄຟຟ້າດອນສະໂຮງ 20%.

II. <u>ແຜນການດຳເນີນທຸລະກິດຂອງບໍລິສັດ 2019</u>

1. ການຜະລິດ ແລະ ການຈຳໜ່າຍ

ຜ-ຟຟລ ຄາດວ່າຈະສາມາດຜະລິດກະແສໄຟຟ້າຈາກເຂື່ອນທີ່ຄຸ້ມຄອງໄດ້ 2.866,35 GWh, ຈາກ 7 ເຂື່ອນ ຜູ້ຜະລິດໄຟຟ້າເອກະລາດທີ່ ຜ-ຟຟລ ເຂົ້າຖືຮຸ້ນໄດ້ 2.454,42 GWh (ຕາມຊັດສ່ວນການຖືຮຸ້ນ) ແລະ ຈາກບໍລິສັດ ອີດີເອ-ເຈນ ໂຊລ່າ ພາວເວີ້ ຈຳກັດ ທີ່ ຜ-ຟຟລ ເຂົ້າຖືຮຸ້ນໄດ້ 31,25 GWh (ຕາມຊັດສ່ວນການຖືຮຸ້ນ), ລວມການຜະລິດທັງໝົດໃນ ປີຈະເປັນ 5.352,01 GWh.

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປລາວ. ຕູ້ ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌:www.edlgen.com.la

ສ່ວນການຈຳໜ່າຍ, ຈາກບັນດາເຂື່ອນທີ່ ຜ-ຟຟລ ຄຸ້ມຄອງຄາດວ່າຈະໄດ້ 2.834,97 GWh, ຈາກ 7 ເຂື່ອນ ຜູ້ຜະລິດໄຟຟ້າເອກະລາດທີ່ ຜ-ຟຟລ ເຂົ້າຖືຮຸ້ນໄດ້ 2.454,12 GWh (ຕາມຊັດສ່ວນການຖືຮຸ້ນ) ແລະ ຈາກບໍລິສັດ ອີ ດີເອ-ເຈນ ໂຊລ່າ ພາວເວີ້ ຈຳກັດ ທີ່ ຜ-ຟຟລ ເຂົ້າຖືຮຸ້ນໄດ້ 31,25 GWh (ຕາມຊັດສ່ວນການຖືຮຸ້ນ), ລວມການຈຳໜ່າຍທັງໝົດຈະມີຢູ່ 5.320,34 GWh.

2. ການລົງທຶນເຂົ້າໃນການຂະຫຍາຍກຳລັງຕິດຕັ້ງ

ໃນປີ 2019, ຜ-ຟຟລ ຈະສືບຕໍ່ລົງທຶນໃນເຂື່ອນຕ່າງໆ ໂດຍສະເພາະບັນດາເຂື່ອນທີ່ໄດ້ລະບຸໄວ້ໜັງສືຊວນຊື້ ຂອງ ຜ-ຟຟລ, ລວມທັງເຂື່ອນໃໝ່ອື່ນໆເຊັ່ນ:

- **ຮຸ້ນໃນໂຄງການເຂື່ອນ IPPs ທີ່ລົງທຶນໂດຍກົງ.**

1.	ເຂື່ອນໄຟຟ້ານ້ຳພູນ ກຳລັງຕິດຕັ້ງຕາມຊັດສ່ວນຖືຮຸ້ນ	51%	23 MW.
2.	ເຂື່ອນໄຟຟ້ານ້ຳບີ 1, 2 ແລະ 3 ກຳລັງຕິດຕັ້ງຕາມຊັດສ່ວນຖືຮຸ້ນ	80%	108 MW.
3.	ເຂື່ອນໄຟຟ້າຫ້ວຍລຳພັນຕອນລຸ່ມກຳລັງຕິດຕັ້ງຕາມຊັດສ່ວນຖືຮຸ້ນ	60%	9 MW.
4.	ເຂື່ອນໄຟຟ້ານ້ຳດິກ 1, 2 & 3 ກຳລັງຕິດຕັ້ງຕາມຊັດສ່ວນຖືຮຸ້ນ	70%	28 MW.

- **ໂຄງການທີ່ລົງທຶນໃນບໍລິສັດລູກ.**

1.	ໂຮງໄຟຟ້າພະລັງງານແສງອາທິດ ກຳລັງຕິດຕັ້ງຕາມຊັດສ່ວນຖືຮຸ້ນ	60%	20,4 MW.

- **ໂຄງການພາກຂະຫຍາຍ.**

1.	ເຂື່ອນໄຟຟ້າພາກຂະຫຍາຍແຊລະບຳ ກຳລັງຕິດຕັ້ງ	8 MW.
2.	ເຂື່ອນໄຟຟ້າພາກຂະຫຍາຍເຊເສັດ 2 ກຳລັງຕິດຕັ້ງ	10 MW.

<u>ຄຳເຫັນຂອງສະພາບໍລິຫານ:</u>

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນ ພິຈາລະນາ ຮັບຮອງເອົາ ບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດປີ 2018 ລວມທັງລາຍງານການເງິນຂອງບໍລິສັດ ປີ 2018 ແລະ ແຜນການດຳເນີນທຸລະກິດຂອງບໍລິສັດປີ 2019.

<u>ຄະແນນສຽງທີ່ຕ້ອງໃຊ້:</u>

ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ ຕ້ອງຜ່ານມະຕິດ້ວຍຄະແນນສຽງຫລາຍກວ່າ ເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 5. ພິຈາລະນາ ແລະ ອະນຸມັດການຈ່າຍເງິນປັນຜົນ ຈາກຜົນການດຳເນີນທຸລະກິດ 6 ເດືອນທ້າຍປີ 2018 (01/07/2018-31/12/2018).

<u>ລາຍລະອຽດ:</u>

ອີງຕາມກົດລະບຽບຂອງບໍລິສັດ, ບໍລິສັດມີນະໂຍບາຍໃນການແບ່ງເງິນປັນຜົນໃນອັດຕາສ່ວນບໍ່ຫຼຸດ 50 ສ່ວນຮ້ອຍຂອງກຳໄລສຸດທິ, ພາຍຫລັງຫັກສ້າງເປັນຄັງສຳຮອງຕາມລະບຽບການ ແລະຄັງສຳຮອງອື່ນໆ (ຖ້າມີ) ໃນແຕ່ລະປີ, ຊຶ່ງການແບ່ງເງິນປັນຜົນຈະຂຶ້ນຢູ່ກັບສະພາບເສດຖະກິດ ແລະແຜນການລົງທຶນຕ່າງໆໃນອະນາຄົດ.

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປລາວ. ຕູ້ ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌:www.edlgen.com.la

ບໍລິສັດມີກຳໄລສຸດທິຈາກຜົນການດຳເນີນທຸລະກິດຂອງບໍລິສັດ ປີ 2018 ເປັນຈຳນວນທັງໝົດ 74,79 ຕື້ກີບ. ສະເໜີກອງປະຊຸມຜູ້ຖືຮຸ້ນ ພິຈາລະນາ ແລະ ອະນຸມັດການຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດຂອງບໍລິສັດ 6 ເດືອນທ້າຍປີ 2018 ພາຍຫຼັງການຫັກເປັນຄັງສຳຮອງຕາມລະບຽບການ ແລະ ຈາກເງິນສະສົມໄວ້ໃນຊຸມປີຜ່ານມາ, ໃຫ້ແກ່ຜູ້ຖືຮຸ້ນທີ່ມີລາຍຊື່ຢູ່ໃນປຶ້ມບັນຊີຜູ້ຖືຮຸ້ນ ໃນວັນທີປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນໃນການໄດ້ຮັບເງິນປັນຜົນ ໃນວັນທີ 24 ເມສາ 2019 ໃນອັດຕາຮຸ້ນລະ 160 ກີບ, ລວມເປັນເງິນປັນຜົນຈ່າຍທັງໝົດ 268,68 ຕື້ກີບ ແລະ ກຳນົດຈ່າຍເງິນປັນຜົນໃນວັນທີ 9 ພຶດສະພາ 2019.

ຄຳເຫັນຂອງສະພາບໍລິຫານ:

ການສະເໜີຈ່າຍເງິນປັນຜົນຂອງບໍລິສັດ ແມ່ນຖືກປະຕິບັດຕາມນະໂຍບາຍການຈ່າຍເງິນປັນຜົນຂອງບໍລິສັດ ແລະ ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນ ພິຈາລະນາອະນຸມັດການຈ່າຍເງິນປັນຜົນດັ່ງກ່າວ.

ຄະແນນສຽງທີ່ຕ້ອງໃຊ້:

ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ ຕ້ອງລົງມະຕິດ້ວຍຄະແນນສຽງຫລາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 6. ພິຈາລະນາ ແລະ ອະນຸມັດການແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ການກຳນົດຄ່າຈ້າງຂອງຜູ້ກວດສອບບັນຊີພາຍນອກ ປີ 2019.

ລາຍລະອຽດ:

ໂດຍອີງຕາມ ກົດໝາຍວ່າດ້ວຍວິສາຫະກິດ ມາດຕາ 149 ວ່າດ້ວຍສິດ ແລະ ໜ້າທີ່ຂອງກອງປະຊຸມສາມັນຜູ້ຖືຮຸ້ນ.

ບໍລິສັດສະເໜີແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກຄື ບໍລິສັດ PricewaterhouseCoopers (Lao) Co., Ltd. (PWC) ເປັນຜູ້ກວດສອບບັນຊີພາຍນອກຂອງບໍລິສັດ ສຳລັບປີ 2019, ເນື່ອງຈາກວ່າ ບໍລິສັດ PWC ຊະນະການປະກວດລາຄາ ແລະ ໃນໄລຍະຜ່ານມາ ບໍລິສັດ PWC ໄດ້ມີຜົນງານການກວດສອບບັນຊີໃຫ້ບໍລິສັດແຕ່ປີ 2011-2015 ໃນຖານະທີ່ເປັນຜູ້ກວດສອບບັນຊີອິດສະຫລະ ເຫັນວ່າບໍລິສັດດັ່ງກ່າວມີຄວາມລະອຽດຮອບຄອບໃນການທົບທວນ ແລະ ການກວດສອບບັນຊີຂອງບໍລິສັດ; ໂດຍໄດ້ມີການກຳນົດຄ່າຈ້າງຂອງຜູ້ກວດສອບບັນຊີພາຍນອກສຳລັບປີ 2019 ເປັນຈຳນວນເງິນບໍ່ເກີນ 771.931.600 ກີບ.

ຄຳເຫັນຂອງສະພາບໍລິຫານ:

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນອະນຸມັດການແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະການກຳນົດຄ່າຈ້າງຂອງຜູ້ກວດສອບບັນຊີພາຍນອກດັ່ງກ່າວ.

ຄະແນນສຽງທີ່ຕ້ອງໃຊ້:

ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ ຕ້ອງລົງມະຕິດ້ວຍຄະແນນສຽງຫລາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌:www.edlgen.com.la

ວາລະທີ 7 : ພິຈາລະນາ ແລະອະນຸມັດການລົງທຶນໃນໂຄງການ EDL-Gen Energy Complex Plaza.

<u>ລາຍລະອຽດ:</u>

ເພື່ອເປັນການສືບຕໍ່ຂະຫຍາຍທຸລະກິດ ຂອງ ຜ-ຟຟລ ໃຫ້ເຕີບໃຫຍ່ຕາມແຜນພັດທະນາຂອງບໍລິສັດ ສະເໜີກອງປະຊຸມພິຈາລະນາການລົງທຶນໃນໂຄງການ EDL-Gen Energy Complex Plaza, ໂດຍຊັດສ່ວນ ການຮ່ວມທຶນຂອງ 3 ຂາຮຸ້ນ ປະກອບມີ : (1) EDL-Gen ("EDL-Gen") ຈຳນວນ 80% ; (2) AVIC-INTL Project Engineering Company ("AVIC") ຈຳນວນ 10%; (3) Guizhou Transportation Planning Survey & Design Academe Co., LTD ("GSDC") ຈຳນວນ 10%. ທຶນຈົດທະບຽນໃນ ການສ້າງຕັ້ງບໍລິສັດ EDL-Gen Energy Complex Plaza ເທົ່າກັບ 18 ລ້ານໂດລາສະຫະລັດ.

ຈຸດປະສົງຫລັກຂອງໂຄງການ: ເພື່ອລົງທຶນ, ພັດທະນາກໍ່ສ້າງ ແລະ ບໍລິຫານໂຄງການດັ່ງກ່າວ, ມີທັງ ໝົດ 16 ຊັ້ນ ໃນນີ້ຫ້ອງການ 12 ຊັ້ນ, ສູນການຄ້າ 3 ຊັ້ນ, ຫ້ອງປະຊຸມ 01 ຊັ້ນ ແລະ ມີສະຖານທີ່ຈອດລົດຊັ້ນໃຕ້ ດິນ 2 ຊັ້ນເຄິ່ງ ສາມາດຮັບຮອງຈອດລົດໄດ້ປະມານ 1.300 ຄັນ.

ແລະ ສະເໜີກອງປະຊຸມມອບອຳນາດໃຫ້ຜູ້ອຳນວຍການໃຫຍ່ ຂອງບໍລິສັດ ແລະ/ຫຼື ບຸກຄົນທີ່ໄດ້ຮັບ ມອບໝາຍຈາກບຸກຄົນ ດັ່ງກ່າວ ເປັນຜູ້ມີອຳນາດໃນການຕິດຕໍ່, ເຈລະຈາ, ກຳນົດເງື່ອນໄຂ, ມູນຄ່າໂຄງການ ແລະ ລາຍລະອຽດທີ່ກ່ຽວຂ້ອງ, ດັດແກ້, ເພີ່ມເຕີມ, ຕີກລົງ, ການດຳເນີນການ, ລົງນາມ, ສົ່ງມອບເອກະສານ ແລະ/ຫຼື ສັນຍາຕ່າງໆ ທີ່ກ່ຽວຂ້ອງກັບການລົງທຶນໂຄງການດັ່ງກ່າວ, ຊຶ່ງລວມເຖິງແຕ່ບໍ່ຈຳກັດພຽງ ສັນຍາຮ່ວມຮຸ້ນ, ສັນຍາເງິນ ກູ້ ແລະ ສັນຍາກໍ່ສ້າງໂຄງການ ລວມເຖິງແຕ່ບໍ່ຈຳກັດພຽງການເປີດເຜີຍຂໍ້ມູນໃດໜຶ່ງທີ່ກ່ຽວຂ້ອງ, ການຕິດຕໍ່, ການໃຫ້ ຂໍ້ຄວາມ, ຂໍ້ມູນແກ່ໜ່ວຍງານຂອງລັດ ແລະ/ຫຼື ອົງການລັດຕ່າງໆທີ່ກ່ຽວຂ້ອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກ ຊັບ ລວມທັງຕະຫຼາດຫຼັກຊັບລາວ ຕະຫຼອດຈົນການກະທຽມ, ດັດແກ້, ເພີ່ມເຕີມ ແລະ/ຫຼື ປ່ຽນແປງຂໍ້ມູນທີ່ກ່ຽວຂ້ອງ ທີ່ຈະຕ້ອງເປີດເຜີຍ ລວມເຖິງການດຳເນີນການໃດ່ໜຶ່ງທີ່ຈຳເປັນ ແລະ ກ່ຽວເນື່ອງກັບການດຳເນີນການ ດັ່ງກ່າວ ໄດ້ທຸກ ຢ່າງຈົນສຳເລັດ.

<u>ຄຳເຫັນຂອງສະພາບໍລິຫານ:</u>

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນ ພິຈາລະນາ ອະນຸມັດ ການລົງທຶນໃນໂຄງການ EDL-Gen Energy Complex Plaza.

<u>ຄະແນນສຽງທີ່ຕ້ອງໃຊ້:</u>

ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ ຕ້ອງລົງມະຕິດ້ວຍຄະແນນສຽງຂອງຜູ້ຖືຮຸ້ນ ຫລືຜູ້ຕາງໜ້າຜູ້ຖືຮຸ້ນຢ່າງໜ້ອຍສອງສ່ວນສາມ (2/3) ຂອງຜູ້ເຂົ້າຮ່ວມກອງປະຊຸມ ແລະ ມີຮຸ້ນລວມກັນຢ່າງໜ້ອຍ ແປດສິບ (80)ສ່ວນຮ້ອຍ ຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດ.

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປລາວ. ຕູ້ ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌:www.edlgen.com.la

ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2017, ວັນທີ 06 ເມສາ 2018

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌:www.edlgen.com.la

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ
ກອງປະຊຸມສາມັນຜູ້ຖືຮຸ້ນ

ນະຄອນຫຼວງວຽງຈັນ, ວັນທີ 20/04/2018

ບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2017
ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ປະຊຸມເມື່ອວັນທີ 06 ເມສາ 2018 ເວລາ 15:00 ໂມງທີ່ຫ້ອງປະຊຸມໃຫຍ່ຊັ້ນ 1, ສຳນັກງານໃຫຍ່ລັດວິສາຫະກິດໄຟຟ້າລາວ, ຖະໜົນມິດຕະພາບລາວ-ໄທ, ບ້ານ ທົ່ງກາງ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ. ເປັນປະທານກອງປະຊຸມໂດຍ ທ່ານ ປອ. ຄຳມະນີ ອິນທິລາດ ປະທານສະພາບໍລິຫານ. ເມື່ອເລີ່ມກອງປະຊຸມມີຜູ້ຖືຮຸ້ນເຂົ້າຮ່ວມກອງປະຊຸມດ້ວຍຕົນເອງຈຳນວນ 93 ທ່ານ ແລະ ມອບສັນທະຈຳນວນ 514 ທ່ານ, ລວມຜູ້ຖືຮຸ້ນເຂົ້າຮ່ວມກອງປະຊຸມທັງໝົດ 607 ທ່ານ ຖືຮຸ້ນລວມກັນທັງໝົດ 1.540.992.074 ຮຸ້ນ ເທົ່າກັບ 91,76 ສ່ວນຮ້ອຍຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດຂອງບໍລິສັດ, ຖືວ່າຄົບອົງປະຊຸມຕາມກົດໝາຍ ແລະ ກົດລະບຽບຂອງ ບໍລິສັດ.

ປະທານກອງປະຊຸມ ໄດ້ແນະນຳສະພາບໍລິຫານແຕ່ລະທ່ານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງທີ່ເຂົ້າຮ່ວມປະຊຸມດັ່ງນີ້:

1. **ທ່ານ ປອ. ຄຳມະນີ ອິນທິລາດ** ຕຳແໜ່ງ: ປະທານສະພາບໍລິຫານ, ລັດຖະມົນຕີ ກະຊວງພະລັງງານ ແລະ ບໍ່ແຮ່;
2. **ທ່ານ ບຸນອຸ້ມ ສີວັນເພັ່ງ** ຕຳແໜ່ງ: ຮອງປະທານສະພາບໍລິຫານບໍລິສັດ, ຜູ້ອຳນວຍການໃຫຍ່ລັດວິສາຫະກິດໄຟຟ້າລາວ;
3. **ທ່ານ ນາງ ລັດຕະນາ ປະທຸມວັນ** ຕຳແໜ່ງ: ກຳມະການສະພາບໍລິຫານ/ ຜູ້ອຳນວຍການໃຫຍ່ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ
4. **ທ່ານ ສີຈາດ ບຸດຊາກົດຕິລາດ** ຕຳແໜ່ງ: ກຳມະການສະພາບໍລິຫານ/ ຫົວໜ້າກົມຄຸ້ມຄອງພະລັງງານ ກະຊວງພະລັງງານ ແລະ ບໍ່ແຮ່;
5. **ທ່ານ ບຸນມາ ມະນີວົງ** ຕຳແໜ່ງ: ກຳມະການສະພາຜູ້ອຳນວຍການ ແລະ ຮອງຜູ້ອຳນວຍການໃຫ່ຍລັດວິສາຫະກິດໄຟຟ້າລາວ;
6. **ທ່ານ ນາງ ວານິດາ ສະຫວັດດີ** ຕຳແໜ່ງ: ກຳມະການສະພາບໍລິຫານ/ ຮອງຫົວໜ້າກົມຮ່ວມມືສາກົນ, ກະຊວງການເງິນ;
7. **ທ່ານ ຮສ.ປອ. ກອງສີ ແສງມະນີ** ຕຳແໜ່ງ: ກຳມະການອິດສະຫຼະ, ຮອງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ.
8. **ທ່ານ ສຈ.ປອ. ຄຳລືຊາ ນອນສະຫວັນ** ຕຳແໜ່ງ: ກຳມະການອິດສະຫຼະ, ຫົວໜ້າກົມກິດຈະການນັກສຶກສາ ກະຊວງສຶກສາທິການ ແລະ ກິລາ
9. **ທ່ານ ຮສ. ຄຳເພີຍ ພົມມະຈັນ** ຕຳແໜ່ງ: ກຳມະການອິດສະຫຼະ, ຫົວໜ້າຫ້ອງການແຜນການການເງິນມະຫາວິທະຍາໄລແຫ່ງຊາດ;

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌:www.edlgen.com.la

ຫລັງຈາກນັ້ນ ປະທານກອງປະຊຸມ ໄດ້ມອບໃຫ້ ທ່ານ ນາງ ລັດຕະນາ ປະທຸມວັນ ຜູ້ອຳນວຍການໃຫຍ່ບໍລິສັດ ອະທິບາຍກ່ຽວກັບວິທີການລົງຄະແນນສຽງໃຫ້ທີ່ປະຊຸມຊາບ ແລະ ລາຍງານແຕ່ລະວາລະຂອງການປະຊຸມ, ຊຶ່ງລາຍລະອຽດດັ່ງລຸ່ມນີ້:

1. ການລົງຄະແນນສຽງ:

- ທ່ານຜູ້ຖືຮຸ້ນໜຶ່ງທ່ານມີຄະແນນສຽງເທົ່າກັບຈຳນວນຮຸ້ນທັງໝົດທີ່ທ່ານຖືຢູ່ ໂດຍໜຶ່ງຮຸ້ນເທົ່າກັບໜຶ່ງສຽງ.
- ໃນການລົງຄະແນນສຽງໃນແຕ່ລະວາລະປະຊຸມ ປະທານຈະຖາມກອງປະຊຸມວ່າ ມີຜູ້ຖືຮຸ້ນທ່ານໃດບໍ່ເຫັນດີ.
    * ຖ້າຫາກມີຜູ້ຖືຮຸ້ນທ່ານໃດບໍ່ເຫັນດີ ໃຫ້ທ່ານນັ້ນກາເຄື່ອງໝາຍໃສ່ຊ່ອງການລົງມະຕິບໍ່ເຫັນດີ ໃນບັດລົງຄະແນນ ທີ່ເຈົ້າໜ້າທີ່ໄດ້ແຈກຢາຍໃຫ້ກ່ອນເຂົ້າປະຊຸມ ແລະຍົກບັດທີ່ກາເຄື່ອງໝາຍນັ້ນຂຶ້ນໃຫ້ສູງຈົນກວ່າຈະມີເຈົ້າໜ້າທີ່ມາເກັບບັດລົງຄະແນນ ເພື່ອນຳໄປກວດນັບຄະແນນສຽງໃນວາລະນັ້ນໆ ແລະ ສຳລັບຜູ້ຖືຮຸ້ນທີ່ບໍ່ໄດ້ຍົກມື ຖືວ່າຜູ້ຖືຮຸ້ນທ່ານນັ້ນ ມີມະຕິເຫັນດີຕາມທີ່ສະເໜີໃນກອງປະຊຸມ.
    * ຖ້າຫາກບໍ່ມີຜູ້ຖືຮຸ້ນທ່ານໃດຍົກມື ໃຫ້ຖືວ່າເຫັນດີຕາມ ເລື້ອງທີ່ໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ, ຍົກເວັ້ນກໍລະນີທີ່ຜູ້ຖືຮຸ້ນໄດ້ເຮັດເຄື່ອງໝາຍ ໃນໃບມອບສັນທະໄວ້ຢ່າງຈະແຈ້ງແລ້ວວ່າຈະລົງມະຕິບໍ່ເຫັນດີ, ຊຶ່ງບໍລິສັດໄດ້ບັນທຶກຄະແນນສຽງທີ່ບໍ່ເຫັນດີດັ່ງກ່າວນັ້ນໄວ້ແລ້ວ.
- ສຳລັບຜູ້ຖືຮຸ້ນທີ່ມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມປະຊຸມແທນ ແລະໃຫ້ຜູ້ຕາງໜ້າລົງຄະແນນສຽງ ຕາມຄວາມຕ້ອງ ການຂອງຜູ້ຖືຮຸ້ນ ຕາມທີ່ຜູ້ຖືຮຸ້ນໄດ້ລະບຸໄວ້ໃນໃບມອບສັນທະນັ້ນ, ບໍລິສັດ ໄດ້ນຳເອົາການລົງຄະແນນສຽງຕາມທີ່ ຜູ້ຖືຮຸ້ນ ລະບຸໄວ້ໃນໃບມອບສັນທະດັ່ງກ່າວ ໄປບັນທຶກລວມຄະແນນໄວ້ລ່ວງໜ້າ ໃນເວລາທີ່ຜູ້ຕາງໜ້າລົງທະບຽນ ເປັນທີ່ຮຽບຮ້ອຍແລ້ວ ເພື່ອເປັນຄວາມສະດວກໃຫ້ແກ່ຜູ້ຕາງໜ້າ ໂດຍຜູ້ຕາງໜ້າບໍ່ຕ້ອງລົງຄະແນນສຽງ ໃນບັດລົງຄະແນນໃນກອງປະຊຸມຕື່ມອີກ.

2. ການນັບຜົນການລົງຄະແນນສຽງ

- ການນັບຜົນການລົງຄະແນນສຽງໃນແຕ່ລະວາລະ ຈະນັບຄະແນນສຽງຂອງຜູ້ຖືຮຸ້ນໃນກອງປະຊຸມ ແລະຂອງຜູ້ຖືຮຸ້ນທີ່ມອບໝາຍໃຫ້ຜູ້ຕາງໜ້າທີ່ບໍລິສັດໄດ້ບັນທຶກໄວ້ລ່ວງໜ້າ ໃນເວລາທີ່ຜູ້ຕາງໜ້າ ລົງທະບຽນເຂົ້າຮ່ວມປະຊຸມ ທີ່ອອກສຽງບໍ່ເຫັນດີ ມາຫັກອອກຈາກຈຳນວນຮຸ້ນທັງໝົດ ຂອງຜູ້ທີ່ມາເຂົ້າຮ່ວມປະຊຸມ ແລະ ລົງຄະແນນສຽງໃນແຕ່ລະວາລະ.
- ປະທານກອງປະຊຸມຈະປະກາດຜົນການລົງຄະແນນສຽງໃນແຕ່ລະວາລະ ໃຫ້ກອງປະຊຸມຮັບຊາບ ຫຼັງຈາກການລົງຄະ ແນນສຽງໃນແຕ່ລະວາລະສິ້ນສຸດລົງ ໂດຍຈະແຍກຄະແນນສຽງເຫັນດີ ແລະ ບໍ່ເຫັນດີວ່າມີຈັກສຽງ ແລະ ເປັນຈຳ ນວນຈັກສ່ວນຮ້ອຍ, ກໍລະນີມີຜູ້ຖືຮຸ້ນທີ່ສົ່ງບັດລົງຄະແນນບໍ່ເຫັນດີ ຫຼັງຈາກທີ່ປະທານໄດ້ປະກາດ ໃຫ້

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌:www.edlgen.com.la

ກອງປະຊຸມຮັບຊາບຜົນການລົງຄະແນນສຽງໃນແຕ່ລະວາລະສິ້ນສຸດລົງແລ້ວນັ້ນ ບໍລິສັດຈະບໍ່ນຳເອົາຄະແນນສຽງດັ່ງກ່າວ ມານັບເປັນຄະແນນສຽງຕື່ມອີກ.

ໂດຍອີງຕາມລະບຽບການ ແລະ ກົດໝາຍທີ່ກ່ຽວຂ້ອງ ໃນກອງປະຊຸມມື້ນີ້ ບໍ່ອະນຸຍາດໃຫ້ຜູ້ສັງເກດການ ມີຄຳຖາມໃນເວລາດຳເນີນກອງປະຊຸມ, ມີພຽງແຕ່ຜູ້ຖືຮຸ້ນເທົ່ານັ້ນມີ ສິດຕັ້ງຄຳຖາມ ແລະ ປະກອບຄຳເຫັນ ກ່ຽວກັບວາລະກອງປະຊຸມ.

ເວລາຕໍ່ມາ, ທ່ານຜູ້ອຳນວຍການໃຫຍ່ ໄດ້ເລີ່ມເຂົ້າສູ່ວາລະກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2017 ໂດຍໄດ້ລາຍງານ ເປັນແຕ່ລະວາລະ ຊຶ່ງມີລາຍລະອຽດດັ່ງລຸ່ມນີ້:

ວາລະທີ 1. ລາຍງານຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີຜ່ານມາ.

ທ່ານຜູ້ອຳນວຍການໃຫຍ່ ໄດ້ລາຍງານຜົນການຈັດຕັ້ງປະຕິບັດ ມະຕິກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີຄັ້ງຜ່ານມາ ເພື່ອໃຫ້ຜູ້ຖືຮຸ້ນຮັບຊາບເຖິງຜົນສຳເລັດການຈັດຕັ້ງປະຕິບັດມະຕິກອງປະຊຸມດັ່ງກ່າວຄື:

I. ກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2016

1. ກ່ຽວກັບ ວາລະ ທີ 1,2,3,4,5,6 ແມ່ນໄດ້ຈັດຕັ້ງປະຕິບັດຕາມການເຫັນດີ ຂອງກອງປະຊຸມຜູ້ຖືຮຸ້ນແລ້ວ.
2. ວາລະທີ 7 ພິຈາລະນາ ແລະ ອະນຸມັດການລົງທຶນໃນໂຄງການເຂື່ອນໄຟຟ້ານ້ຳຊັນ 3A ແລະເຂື່ອນໄຟຟ້ານ້ຳຊັນ 3B ແມ່ນກຳລັງຢູ່ໃນຂັ້ນຕອນດຳເນີນການ.

II. ກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1/2017

1. ກ່ຽວກັບວາລະທີ 1 ແມ່ນໄດ້ຈັດຕັ້ງປະຕິບັດຕາມການເຫັນດີ ຂອງ ກອງປະຊຸມແລ້ວ. ວາລະທີ 2 ພິຈາລະນາ ແລະອະນຸມັດການຮັບໂອນຮຸ້ນສາມັນ 20% ຂອງບໍລິສັດ ໄຊຍະບູລີ ພາວເວີຈຳກັດ, ແລະຮຸ້ນສາມັນ 20% ຂອງບໍລິສັດໄຟຟ້າດອນສະໂຮງ ຈຳກັດ ໃນໂຄງການຜູ້ຜະລິດໄຟຟ້າເອກະລາດ ຈາກລັດວິສາຫະກິດໄຟຟ້າລາວ; ແລະວາລະທີ 3 ພິຈາລະນາ ແລະ ອະນຸມັດການຊອກຫາແຫຼ່ງທຶນ ເພື່ອຊື້ຮຸ້ນໃນໂຄງການຜູ້ຜະລິດໄຟຟ້າເອກະລາດຈາກລັດວິສາຫະກິດໄຟຟ້າລາວ ແມ່ນຢູ່ໃນຂັ້ນຕອນການດຳເນີນການທາງດ້ານນິຕິກຳ, ຄາດໝາຍຈະສຳເລັດພາຍໃນເດືອນ 6/2018.

ຫລັງຈາກຜູ້ອຳນວຍການໃຫຍ່ ລາຍງານໂດຍຫຍໍ້ ກ່ຽວກັບວາລະທີ 1 ແລ້ວ, ປະທານກອງປະຊຸມ ໄດ້ເປີດໂອກາດ ເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະຜູ້ຖືຮຸ້ນທ່ານໃດມີຄຳຖາມ ສາມາດຖາມໄດ້, ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດມີຄຳຖາມແຕ່ຢ່າງໃດ.

ຕໍ່ມາ ປະທານກອງປະຊຸມ ໄດ້ແຈ້ງໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນຊາບວ່າ, ລາຍງານຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມດັ່ງກ່າວ ແມ່ນລາຍງານໃຫ້ຜູ້ຖືຮຸ້ນຮັບຊາບເທົ່ານັ້ນ, ວາລະນີ້ແມ່ນບໍ່ມີການລົງຄະແນນສຽງ.

ກອງປະຊຸມໄດ້ຮັບຊາບຕາມການລາຍງານ ຂອງຜູ້ອຳນວຍການໃຫຍ່ ກ່ຽວກັບການຈັດຕັ້ງປະຕິບັດມະຕິກອງປະຊຸມຜູ້ຖືຮຸ້ນປະຈຳປີຜ່ານມາທຸກປະການ.

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປລາວ. ຕູ້ ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌:www.edlgen.com.la

ວາລະທີ 2. ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມ ວິສາມັນຜູ້ຖືຮຸ້ນ ຄັ້ງທີ 1/2017, ວັນທີ 25 ຕຸລາ 2017.

ທ່ານຜູ້ອຳນວຍການໃຫຍ່ ໄດ້ສະເໜີຕໍ່ທີ່ປະຊຸມ ພິຈາລະນາ ແລະ ຮັບຮອງກ່ຽວກັບບົດບັນທຶກກອງປະຊຸມ ວິສາມັນຜູ້ຖືຮຸ້ນ ຄັ້ງທີ1/2017 ໄດ້ຈັດຂຶ້ນໃນວັນທີ 25 ຕຸລາ 2017, ຊຶ່ງ ບໍລິສັດ ໄດ້ມີການບັນທຶກກອງປະຊຸມດັ່ງກ່າວມີລາຍລະອຽດໃນ **<u>ເອກະສານຄັດຕິດ 2</u>** ທີ່ໄດ້ຄັດຕິດກັບໜັງສືແຈ້ງເຊີນ ແລະ ໄດ້ເປີດເຜີຍບົດບັນທຶກດັ່ງກ່າວ ໃນເວັບໄຊທ໌ ຂອງ ຕະຫລາດຫລັກຊັບລາວ ແລະ ເວັບໄຊທ໌ ຂອງ ບໍລິສັດ ແລ້ວ.

ສະພາບໍລິຫານໄດ້ຮັບຮອງຄວາມຖືກຕ້ອງ ແລະ ຄົບຖ້ວນແລ້ວ, ເຫັນດີສະເໜີໃຫ້ກອງປະຊຸມ ພິຈາລະນາຮັບຮອງບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນຄັ້ງທີ 1/2017, ວັນທີ 25 ຕຸລາ 2017.

ຫລັງຈາກຜູ້ອຳນວຍການໃຫຍ່ ລາຍງານໂດຍຫຍໍ້ ກ່ຽວກັບວາລະທີ 2 ແລ້ວ, ປະທານກອງປະຊຸມໄດ້ ເປີດໂອກາດ ເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມ ສາມາດຖາມໄດ້, ແຕ່ບໍ່ມີຜູ້ຖືຮຸ້ນທ່ານ ໃດມີຄຳຖາມແຕ່ຢ່າງໃດ, ຈາກນັ້ນ ປະທານກອງປະຊຸມຈຶ່ງໄດ້ ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງເອົາບົດ ບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນຄັ້ງທີ 1/2017, ວັນທີ 25 ຕຸລາ 2017 ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງ ຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິກອງປະຊຸມດັ່ງນີ້:

ມະຕິ: ກອງປະຊຸມເຫັນດີ ຮັບຮອງບົດບັນທຶກກອງປະຊຸມ ວິສາມັນຜູ້ຖືຮຸ້ນ ຄັ້ງທີ 1/2017, ວັນທີ 25 ຕຸລາ 2017. ກອງປະຊຸມໄດ້ມີມະຕິ ດ້ວຍຄະແນນສຽງຫລາຍກວ່າເຄິ່ງໜຶ່ງ ຂອງ ຈຳນວນສຽງທັງໝົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- **ເຫັນດີຈຳນວນ 1.540.991.774 ສຽງ, ເທົ່າກັບ 99,99 ສ່ວນຮ້ອຍ ຂອງຈຳນວນສຽງ ທັງໝົດທີ່ເຂົ້າຮ່ວມກອງປະຊຸມ.**
- **ບໍ່ເຫັນດີຈຳນວນ 300 ສຽງ, ເທົ່າກັບ 0,00002 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ.**

ວາລະທີ 3. ພິຈາລະນາ ແລະ ຮັບຮອງລາຍງານການເງິນ 6 ເດືອນຕົ້ນປີ 2017 (01/01/2017-30/06/2017) ແລະ ການຈ່າຍເງິນປັນຜົນຈາກການດຳເນີນທຸລະກິດ 6 ເດືອນຕົ້ນປີ 2017.

ທ່ານຜູ້ອຳນວຍການໃຫຍ່ ໄດ້ສະເໜີຕໍ່ທີ່ປະຊຸມ ເພື່ອພິຈາລະນາ ແລະ ຮັບຮອງລາຍງານການເງິນ 6 ເດືອນຕົ້ນປີ 2017 (01/01/2017-30/06/2017) ແລະ ການຈ່າຍເງິນປັນຜົນຈາກການດຳເນີນທຸລະກິດ 6 ເດືອນຕົ້ນປີ 2017 ອີງຕາມການມອບອຳນາດຈາກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2012 ເມື່ອວັນທີ 22 ເມສາ 2013, ການ ເຄື່ອນໄຫວທຸລະກິດຂອງບໍລິສັດໃນ 6 ເດືອນຕົ້ນປີ 2017 ມີກຳໄລສຸດທິ 129,41 ຕື້ກີບ, ຊຶ່ງຜູ້ກວດສອບພາຍນອກໄດ້ ມີການທົບທວນແລ້ວ ແລະ ບໍລິສັດໄດ້ເປີດເຜີຍລາຍງານດັ່ງກ່າວໃນເວັບໄຊທ໌ ຂອງຕະຫຼາດຫຼັກຊັບລາວ ແລະ ເວັບ ໄຊທ໌ ຂອງ ບໍລິສັດ.

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌:www.edlgen.com.la

ບໍລິສັດໄດ້ຈ່າຍເງິນປັນຜົນ 6 ເດືອນຕົ້ນປີ 2017 ໃຫ້ຜູ້ຖືຮຸ້ນທີ່ມີລາຍຊື່ໃນປຶ້ມບັນຊີຜູ້ຖືຮຸ້ນທີ່ໄດ້ກຳນົດສິດ ຂອງຜູ້ຖືຮຸ້ນໃນການໄດ້ຮັບເງິນປັນຜົນ ໃນວັນທີ 29 ກັນຍາ 2017 ໃນອັດຕາ 110 ກີບຕໍ່ຮຸ້ນ, ລວມເງິນປັນຜົນທີ່ຈ່າຍທັງໝົດປະມານ **184,72** ຕື້ກີບ ແລະ ໄດ້ຈ່າຍເງິນປັນຜົນດັ່ງກ່າວໃຫ້ຜູ້ຖືຮຸ້ນໃນວັນທີ **9 ຕຸລາ 2017**.

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນພິຈາລະນາຮັບຮອງເອົາລາຍງານການເງິນ 6 ເດືອນຕົ້ນປີ 2017 ແລະ ການຈ່າຍເງິນປັນຜົນຈາກການດຳເນີນທຸລະກິດ 6 ເດືອນຕົ້ນປີ 2017.

ຫລັງຈາກ ຜູ້ອຳນວຍການໃຫຍ່ ລາຍງານໂດຍຫຍໍ້ ກ່ຽວກັບວາລະທີ 3 ແລ້ວ, ປະທານກອງປະຊຸມ ໄດ້ເປີດໂອກາດ ເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມ ສາມາດຖາມໄດ້, ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດມີຄຳຖາມແຕ່ຢ່າງໃດ; ຈາກນັ້ນປະທານກອງປະຊຸມຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງລາຍງານການເງິນ 6 ເດືອນຕົ້ນປີ 2017 (01/01/2017-30/06/2017) ແລະ ການຈ່າຍເງິນປັນຜົນຈາກການດຳເນີນທຸລະກິດ 6 ເດືອນຕົ້ນປີ 2017, ວາລະນີ້ກອງປະຊຸມຈະຕ້ອງລົງມະຕິອະນຸມັດ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິກອງປະຊຸມດັ່ງນີ້:

ມະຕິ: ກອງປະຊຸມເຫັນດີ ຮັບຮອງລາຍງານການເງິນ 6 ເດືອນຕົ້ນປີ 2017 (01/01/2017-30/06/2017) ແລະ ການຈ່າຍເງິນປັນຜົນຈາກການດຳເນີນທຸລະກິດ 6 ເດືອນຕົ້ນປີ 2017. ກອງປະຊຸມໄດ້ມີມະຕິ ດ້ວຍຄະແນນສຽງຫລາຍກວ່າເຄິ່ງໜຶ່ງ ຂອງຈຳນວນສຽງທັງໝົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- **ເຫັນດີຈຳນວນ 1.541.428.774 ສຽງ, ເທົ່າກັບ 99,99 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.**
- **ບໍ່ເຫັນດີຈຳນວນ 800 ສຽງ, ເທົ່າກັບ 0,00005 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.**

ວາລະທີ 4. ພິຈາລະນາ ແລະ ຮັບຮອງບົດລາຍງານຜົນການດຳເນີນທຸລະກິດ ຂອງ ບໍລິສັດປີ 2017 ລວມທັງລາຍງານການເງິນ ຂອງ ບໍລິສັດປີ 2017 ແລະ ແຜນການດຳເນີນທຸລະກິດ ຂອງ ບໍລິສັດ ປີ 2018.

ທ່ານຜູ້ອຳນວຍການໃຫຍ່ ໄດ້ສະເໜີຕໍ່ທີ່ປະຊຸມ ເພື່ອພິຈາລະນາ ແລະ ຮັບຮອງບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດ ປີ 2017, ຜ-ຟຟລ ໄດ້ດຳເນີນທຸລະກິດໃນການຜະລິດກະແສໄຟຟ້າຂາຍຍົກໃຫ້ ລັດວິສາຫະກິດໄຟຟ້າລາວ (ຟຟລ) ແລະ ໄດ້ປັບປຸງການຄຸ້ມຄອງບໍລິຫານພາຍໃນຈຳນວນໜຶ່ງ ເພື່ອໃຫ້ຖືກຕ້ອງ ແລະ ສອດຄ່ອງກັບກົດລະບຽບຕ່າງໆ ຂອງ ບໍລິສັດມະຫາຊົນ ທີ່ຈົດທະບຽນໃນຕະຫລາດຫລັກຊັບລາວ, ປັດຈຸບັນບໍລິສັດມີທຶນຈົດທະບຽນທັງໝົດ 6.717.214.788.000 ກີບ, ຄິດເປັນຮຸ້ນເທົ່າກັບ 1.679.303.697 ຮຸ້ນ. ຊຶ່ງຜົນການດຳເນີນທຸລະກິດໃນປີ 2017 ສັງລວມໄດ້ດັ່ງລຸ່ມນີ້:

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌:www.edlgen.com.la

1. **ການຜະລິດ:** ໃນການດຳເນີນທຸລະກິດປີ 2017, ດ້ວຍກຳລັງການຜະລິດທັງໝົດ 1.131 MW; ໃນນີ້, ກຳລັງການຜະລິດທີ່ ບໍລິສັດ ຄຸ້ມຄອງ 100% ມີທັງໝົດ 619 MW ສາມາດຜະລິດກະແສໄຟຟ້າໄດ້ 2.610,37 GWh, ແລະກຳລັງການຜະລິດທີ່ ບໍລິສັດ ເຂົ້າຖືຮຸ້ນໃນ 5 ເຂື່ອນຜູ້ຜະລິດໄຟຟ້າເອກະລາດ ມີທັງໝົດ 512 MW (ຕາມຊັດສ່ວນການຖືຮຸ້ນ), ສາມາດຜະລິດກະແສໄຟຟ້າທັງໝົດ 2.582,11 GWh, ລວມການຜະລິດທັງໝົດປະຕິບັດໄດ້ 5.192,48 GWh.

2. **ລາຍຮັບ:** ໃນປີ 2017, ບໍລິສັດສາມາດສ້າງລາຍຮັບຈາກການຈຳໜ່າຍກະແສໄຟຟ້າໄດ້ 1.241,12 ຕື້ກີບ.

3. **ລາຍຈ່າຍ:** ໃນປີ 2017 ບໍລິສັດມີລາຍຈ່າຍເປັນເງິນຈຳນວນ 1.179,68 ຕື້ກີບ.

4. **ການມອບພັນທະໃຫ້ລັດ:** ບໍລິສັດໄດ້ມອບພັນທະໃຫ້ລັດທັງໝົດປະມານ 210,47 ຕື້ກີບ.

5. **ກຳໄລ:** ການດຳເນີນທຸລະກິດປີ 2017 ຂອງບໍລິສັດ ມີກຳໄລສຸດທິ ທັງໝົດຈຳນວນ 472,15 ຕື້ກີບ.

ພ້ອມກັນນັ້ນ, ບໍລິສັດຍັງໄດ້ເອົາໃຈໃສ່ໃນການພັດທະນາບຸກຄະລາກອນໃຫ້ນັບມື້ນັບເຂັ້ມແຂງ, ອີກດ້ານໜຶ່ງບໍລິສັດໄດ້ໃຫ້ຄວາມສຳຄັນກັບວຽກງານສິ່ງແວດລ້ອມ ແລະ ສັງຄົມ ໂດຍປະກອບສ່ວນເປັນຈຳນວນຫລາຍສົມຄວນ ພ້ອມທັງໄດ້ສ້າງກິດຈະກຳຮ່ວມກັບຊາວບ້ານອ້ອມຂ້າງບັນດາເຂື່ອນຕ່າງໆ ທີ່ບໍລິສັດຄຸ້ມຄອງ ເປັນຕົ້ນແມ່ນການປູກຕົ້ນໄມ້ ແລະ ປ່ອຍປາ, ມອບອຸປະກອນການສຶກສາ, ອຸປະກອນການແພດ ແລະ ບໍລິຈາກເຄື່ອງນຸ່ງຫົ່ມໃຫ້ປະຊາຊົນອ້ອມຂ້າງບັນດາເຂື່ອນ ລວມເປັນເງິນທັງໝົດປະມານ 1,21 ຕື້ກວ່າກີບ.

ໃນປີ 2018, ບໍລິສັດມີແຜນຈະສືບຕໍ່ລົງທຶນໃນ:

1) **ໂຄງການທີ່ລັດວິສາຫະກິດໄຟຟ້າລາວລົງທຶນ**
2) **ໂຄງການມີ່ລັດວິສາຫະກິດໄຟ້າລາວເຂົ້າຖືຮຸ້ນ**
3) **ໂຄງການທີ່ບໍລິສັດມີແຜນຈະລົງທຶນຮ່ວມທຶນກັບເຂື່ອນຜູ້ຜະລິດໄຟຟ້າເອກະລາດ**

ລາຍລະອຽດມີໃນໜັງສືແຈ້ງເຊີນ ທີ່ໄດ້ເປີດເຜີຍໃຫ້ບັນດາທ່ານຊາບໃນເວັບໄຊລ໌ ຂອງ ຕະຫຼາດຫຼັກຊັບລາວ ແລະ ເວັບໄຊລ໌ ຂອງ ບໍລິສັດ ແລ້ວ.

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາຮັບຮອງເອົາບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດປີ 2017 ລວມທັງລາຍງານການເງິນຂອງບໍລິສັດປີ 2017 ແລະ ແຜນການດຳເນີນທຸລະກິດຂອງບໍລິສັດປີ 2018.

ຫລັງຈາກຜູ້ອຳນວຍການໃຫຍ່ ລາຍງານໂດຍຫຍໍ້ ກ່ຽວກັບວາລະທີ 4 ແລ້ວ, ປະທານກອງປະຊຸມໄດ້ເປີດໂອກາດ ເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມສາມາດຖາມໄດ້, ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດມີຄຳຖາມແຕ່ຢ່າງໃດ, ຈາກນັ້ນປະທານກອງປະຊຸມຈຶ່ງໄດ້ ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດປີ 2017 ລວມທັງລາຍງານການເງິນຂອງບໍລິສັດປີ 2017 ແລະແຜນການດຳເນີນທຸລະກິດຂອງບໍລິສັດປີ 2018, ວາລະນີ້ກອງປະຊຸມຈະຕ້ອງລົງມະຕິອະນຸມັດ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິກອງປະຊຸມດັ່ງນີ້:

ມະຕິ: ກອງປະຊຸມເຫັນດີ ແລະ ຮັບຮອງບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດ ປີ 2017 ລວມທັງລາຍງານການເງິນຂອງບໍລິສັດ ປີ 2017 ແລະ ແຜນການດຳເນີນທຸລະ

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌:www.edlgen.com.la

ກິດຂອງບໍລິສັດປີ 2018. ກອງປະຊຸມໄດ້ມີມະຕິ ດ້ວຍຄະແນນສຽງຫລາຍກວ່າເຄິ່ງໜຶ່ງ ຂອງຈຳນວນສຽງທັງໝົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- **ເຫັນດີຈຳນວນ 1.541.428.774 ສຽງ, ເທົ່າກັບ 99,99 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.**
- **ບໍ່ເຫັນດີຈຳນວນ 800 ສຽງ, ເທົ່າກັບ 0,00005 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ**

ວາລະທີ 5. ພິຈາລະນາ ແລະ ອະນຸມັດການຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດ 6 ເດືອນທ້າຍປີ 2017 (01/07/2017-31/12/2017)

ທ່ານຜູ້ອຳນວຍການໃຫຍ່ ໄດ້ສະເໜີຕໍ່ທີ່ປະຊຸມ ເພື່ອພິຈາລະນາ ແລະ ອະນຸມັດການຈ່າຍເງິນປັນຜົນ ຈາກ ຜົນການດຳເນີນທຸລະກິດ 6 ເດືອນທ້າຍປີ 2017 (01/07/2017-31/12/2017) ອີງຕາມກົດລະບຽບຂອງ ບໍລິສັດ, ບໍລິສັດມີນະໂຍບາຍໃນການແບ່ງເງິນປັນຜົນໃນອັດຕາສ່ວນບໍ່ໜຸດ 50 ສ່ວນຮ້ອຍຂອງກຳໄລສຸດທິ, ພາຍຫຼັງ ຫັກສ້າງເປັນຄັງສຳຮອງຕາມລະບຽບການ ແລະ ຄັງສຳຮອງອື່ນໆ (ຖ້າມີ) ໃນແຕ່ລະປີຊຶ່ງການແບ່ງເງິນປັນຜົນຈະຂຶ້ນຢູ່ ກັບສະພາບເສດຖະກິດ ແລະ ແຜນການລົງທຶນຕ່າງໆໃນອະນາຄົດ.

ບໍລິສັດມີກຳໄລສຸດທິຈາກຜົນການດຳເນີນທຸລະກິດ 6 ເດືອນທ້າຍປີ 2017 ເປັນເງິນຈຳນວນທັງໝົດ **342,95 ຕື້ກີບ**. ສະເໜີກອງປະຊຸມຜູ້ຖືຮຸ້ນພິຈາລະນາ ແລະ ອະນຸມັດການຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະ ກິດຂອງບໍລິສັດ 6 ເດືອນທ້າຍປີ 2017 ພາຍຫຼັງການຫັກເປັນຄັງສຳຮອງຕາມລະບຽບການ ແລະ ຫັກຄັງສຳຮອງອື່ນໆ, ໃຫ້ແກ່ຜູ້ຖືຮຸ້ນທີ່ມີລາຍຊື່ຢູ່ໃນປຶ້ມບັນຊີຜູ້ຖືຮຸ້ນ ໃນວັນທີປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນໃນການໄດ້ ຮັບເງິນປັນຜົນໃນວັນທີ **25 ເມສາ 2018** ໃນອັດຕາ **180** ກີບຕໍ່ຮຸ້ນ, ລວມເປັນເງິນປັນຜົນຈ່າຍທັງໝົດ **302,27** ຕື້ ກີບ ແລະ ກຳນົດຈ່າຍເງິນປັນຜົນໃນວັນທີ **09 ພຶດສະພາ 2018**.

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາອະນຸມັດການ ຈ່າຍເງິນປັນຜົນດັ່ງກ່າວ.

ຫລັງຈາກຜູ້ອຳນວຍການໃຫຍ່ ລາຍງານໂດຍຫຍໍ້ ກ່ຽວກັບວາລະທີ 5 ແລ້ວ, ປະທານກອງປະຊຸມ ໄດ້ ເປີດໂອກາດ ເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມສາມາດຖາມໄດ້, ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດ ມີຄຳຖາມແຕ່ຢ່າງໃດ, ຈາກນັ້ນປະທານກອງປະຊຸມຈຶ່ງໄດ້ ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ອະນຸມັດການຈ່າຍ ເງິນປັນຜົນຈາກຜົນການດຳເນີນທຸລະກິດ 6 ເດືອນທ້າຍປີ 2017 (01/07/2017-31/12/2017), ວາລະນີ້ກອງປະຊຸມ ຈະຕ້ອງລົງມະຕິອະນຸມັດ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ກອງປະຊຸມໄດ້ພິຈາລະນາແລ້ວ ແລະມີມະຕິກອງປະຊຸມດັ່ງນີ້:

ມະຕິ: ກອງປະຊຸມເຫັນດີ ອະນຸມັດການຈ່າຍເງິນປັນຜົນ ຈາກຜົນການດຳເນີນທຸລະກິດ 6 ເດືອນ ທ້າຍປີ 2017 (01/07/2017-31/ 12/2017) ພາຍຫຼັງການຫັກເປັນຄັງສຳຮອງຕາມ ລະບຽບການ ແລະ ຄັງສຳຮອງອື່ນໆ, ໃຫ້ຜູ້ຖືຮຸ້ນທີ່ມີລາຍຊື່ຢູ່ໃນປຶ້ມບັນຊີຜູ້ຖືຮຸ້ນ ໃນວັນ ທີປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນໃນການໄດ້ຮັບເງິນປັນຜົນ ໃນວັນທີ 25 ເມສາ 2018 ໃນອັດຕາຮຸ້ນລະ 180 ກີບ, ລວມເປັນເງິນປັນຜົນຈ່າຍທັງໝົດ 302,27

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌:www.edlgen.com.la

ຕໍ່ກົບ ແລະກຳນົດຈ່າຍເງິນປັນຜົນໃນວັນທີ 9 ພຶດສະພາ 2018. ກອງປະຊຸມໄດ້ມີມະຕິ ດ້ວຍຄະແນນສຽງຫລາຍກວ່າເຄິ່ງໜຶ່ງ ຂອງຈຳນວນສຽງທັງໝົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມ ກອງປະຊຸມ ດັ່ງນີ້:

- **ເຫັນດີຈຳນວນ 1.541.428.774 ສຽງ, ເທົ່າກັບ 99,99 ສ່ວນຮ້ອຍ ຂອງຈຳນວນສຽງ ທັງໝົດທີ່ເຂົ້າຮ່ວມກອງປະຊຸມ.**
- **ບໍ່ເຫັນດີຈຳນວນ 800 ສຽງ,ເທົ່າກັບ 0,00005 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ ເຂົ້າຮ່ວມກອງປະຊຸມ**

ວາລະທີ 6. ພິຈາລະນາ ແລະ ອະນຸມັດການແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ການກຳນົດຄ່າຈ້າງຂອງຜູ້ ກວດສອບບັນຊີພາຍນອກປີ 2018.

ທ່ານຜູ້ອຳນວຍການໃຫຍ່ ໄດ້ສະເໜີຕໍ່ທີ່ປະຊຸມ ເພື່ອພິຈາລະນາ ແລະ ອະນຸມັດການແຕ່ງຕັ້ງຜູ້ກວດ ສອບບັນຊີພາຍນອກ ແລະ ການກຳນົດຄ່າຈ້າງຂອງຜູ້ກວດສອບບັນຊີພາຍນອກປີ 2018 ໂດຍອີງຕາມກົດໝາຍວ່າ ດ້ວຍວິສາຫະກິດ ແລະ ລະບຽບການທີ່ກ່ຽວຂ້ອງ, ບໍລິສັດສະເໜີແຕ່ງຕັ້ງຜູ້ກວດສອບບັນຊີບໍລິສັດໃໝ່ຄື: ບໍລິສັດ Klynveld Peat Marwick Goerdeler (KPMG) ເປັນຜູ້ກວດສອບບັນຊີພາຍນອກຂອງບໍລິສັດປະຈຳປີ 2018, ເນື່ອງຈາກວ່າບໍລິສັດ KPMG ໄດ້ມີຜົນງານການກວດສອບບັນຊີໃຫ້ບໍລິສັດໃນປີ 2017 ຜ່ານມາເຫັນວ່າການປະຕິບັດ ວຽກງານ ແລະ ການປະສານງານຂອງບໍລິສັດດັ່ງກ່າວແມ່ນຢູ່ໃນລະດັບດີ,ຜູ້ກວດສອບບັນຊີແລະ ທີມງານມີຄວາມ ເຂົ້າໃຈແຈ້ງໃນໜ້າທີ່ໃນຖານະທີ່ເປັນຜູ້ກວດສອບບັນຊີອິດສະຫລະ ມີຄວາມລະອຽດຮອບຄອບໃນການທົບທວນ ແລະ ການກວດສອບບັນຊີຂອງບໍລິສັດ ແລະ ປະຕິບັດວຽກງານແມ່ນສຳເລັດທັນເວລາຕາມ ທີ່ລະບຽບຕ່າງໆໄດ້ກຳນົດໄວ້; ກຳນົດຄ່າຈ້າງຂອງຜູ້ກວດສອບບັນຊີພາຍນອກປີ 2018 ເປັນເງິນຈຳນວນ **94.500** ໂດລາສະຫະລັດ.

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນອະນຸມັດການແຕ່ງຕັ້ງຜູ້ ກວດສອບບັນຊີພາຍນອກແລະການກຳນົດຄ່າຈ້າງຂອງຜູ້ກວດສອບບັນຊີພາຍນອກປີ 2018.

ຫລັງຈາກຜູ້ອຳນວຍການໃຫຍ່ ລາຍງານໂດຍຫຍໍ້ ກ່ຽວກັບວາລະທີ 6 ແລ້ວ, ປະທານກອງປະຊຸມໄດ້ ເປີດໂອກາດ ເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມສາມາດຖາມໄດ້, ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດ ມີຄຳຖາມແຕ່ຢ່າງໃດ, ຈາກນັ້ນປະທານກອງປະຊຸມຈຶ່ງໄດ້ ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ອະນຸມັດການແຕ່ງຕັ້ງ ຜູ້ກວດສອບບັນຊີພາຍນອກ ແລະ ການກຳນົດຄ່າຈ້າງຂອງຜູ້ກວດສອບບັນຊີພາຍນອກປີ 2018, ວາລະນີ້ກອງປະຊຸມ ຈະຕ້ອງລົງມະຕິອະນຸມັດ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ກອງປະຊຸມໄດ້ພິຈາລະນາແລ້ວ ແລະມີມະຕິກອງປະຊຸມດັ່ງນີ້:

ມະຕິ: ກອງປະຊຸມເຫັນດີ ອະນຸມັດການແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກຄືບໍລິສັດ Klynveld Peat Marwick Goerdeler (KPMG) ເປັນຜູ້ກວດສອບບັນຊີພາຍ ນອກຂອງບໍລິສັດ ສຳລັບປີ 2018, ໂດຍຄ່າຈ້າງຂອງຜູ້ກວດສອບບັນ ຊີພາຍນອກສຳລັບ ປີ 2018 ເປັນຈຳນວນເງິນ 94.500 ໂດລາສະຫະລັດ. ກອງປະຊຸມໄດ້ມີມະຕິດ້ວຍຄະ ແນນສຽງຫລາຍກວ່າເຄິ່ງໜຶ່ງ ຂອງຈຳນວນສຽງທັງໝົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງ ປະຊຸມ ດັ່ງນີ້:

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌:www.edlgen.com.la

- **ເຫັນດີຈຳນວນ 1.541.429.574 ສຽງ, ເທົ່າກັບ 100 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.**

ວາລະທີ 7. ພິຈາລະນາ ແລະ ຮັບຮອງເອົາສະພາບໍລິຫານຊຸດໃໝ່ເພື່ອປ່ຽນແທນສະພາບໍລິຫານທີ່ຄົບອາຍຸການ.

ທ່ານຜູ້ອຳນວຍການໃຫຍ່ ໄດ້ສະເໜີຕໍ່ທີ່ປະຊຸມ ເພື່ອພິຈາລະນາ ແລະ ຮັບຮອງເອົາສະພາບໍລິຫານຊຸດໃໝ່ເພື່ອປ່ຽນແທນສະພາບໍລິຫານທີ່ຄົບອາຍຸການ ອີງຕາມກົດໝາຍວ່າດ້ວຍວິສາຫະກິດ ແລະ ອີງຕາມບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2015 ໄດ້ລະບຸໄວ້ວ່າ ອາຍຸການຂອງສະພາບໍລິຫານຂອງບໍລິສັດທັງໝົດມີກຳນົດ 2 ປີໂດຍເລີ່ມນັບແຕ່ວັນທີກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2015 ເປັນຕົ້ນໄປ. ຊຶ່ງມາຮອດປັດຈຸບັນເຫັນວ່າອາຍຸການສະພາບໍລິຫານຂອງບໍລິສັດໄດ້ປະຕິບັດວຽກງານຄົບວາລະ 2 ປີແລ້ວ.

ເນື່ອງຈາກວ່າບັນດາຄະນະສະພາບໍລິຫານຂອງບໍລິສັດແມ່ນ ມີຄຸນວຸດທິການສຶກສາສູງ, ມີຄວາມຮູ້ຄວາມສາມາດ, ມີປະສົບການໃນການດຳເນີນທຸລະກິດ ແລະ ການປະຕິບັດວຽກງານຜ່ານມາແຕ່ລະທ່ານແມ່ນໄດ້ມີຄວາມເອົາໃຈ ໃສ່ຕໍ່ບໍລິສັດ ແລະ ເຂົ້າຮ່ວມກອງປະຊຸມສະພາບໍລິຫານຢ່າງເປັນປົກກະຕິ.

ສະເໜີໃຫ້ກອງປະຊຸມ ພິຈາລະນາໃຫ້ຄະນະສະພາບໍລິຫານຊຸດເກົ່າສືບຕໍ່ປະຕິບັດວຽກງານເປັນສະພາບໍລິຫານ ຂອງບໍລິສັດອີກວາລະໜຶ່ງ, ມີລາຍຊື່ດັ່ງລຸ່ມນີ້:

ຄະນະສະພາບໍລິຫານຊຸດເກົ່າທີ່ຈະສືບຕໍ່ປະຕິບັດວຽກງານອີກວາລະໜຶ່ງມີຄື:

1.	ທ່ານ	ປອ. ຄຳມະນີ ອິນທິລາດ	ປະທານສະພາບໍລິຫານ
2.	ທ່ານ	ບຸນອູ້ມ ສີວັນເພັງ	ຮອງປະທານສະພາບໍລິຫານ
3.	ທ່ານ	ນາງ ລັດຕະນາ ປະທຸມວັນ	ກຳມະການສະພາບໍລິຫານ
4.	ທ່ານ	ບຸນມາ ມະນີວົງ	ກຳມະການສະພາບໍລິຫານ
5.	ທ່ານ	ນາງ ວານິດາ ສະຫວັດດີ	ກຳມະການສະພາບໍລິຫານ
6.	ທ່ານ	ສີຈາດ ບຸດຊາກົດຕິລາດ	ກຳມະການສະພາບໍລິຫານ
7.	ທ່ານ	ຮສ.ປອ ກອງສີ ແສງມະນີ	ກຳມະການອິດສະຫຼະ
8.	ທ່ານ	ສຈ.ປອ. ຄຳລືຊາ ນອນສະຫວັນ	ກຳມະການອິດສະຫຼະ
9.	ທ່ານ	ຮສ. ຄຳເຜີຍ ພົມມະຈັນ	ກຳມະການອິດສະຫຼະ

ສະເໜີກຳນົດລາຍຊື່ຜູ້ທີ່ມີອຳນາດລົງລາຍເຊັນຜູກພັນບໍລິສັດດັ່ງນີ້:

1. ປະທານສະພາບໍລິຫານ ຫຼື ຮອງປະທານສະພາບໍລິຫານ ຫຼື ຜູ້ອຳນວຍການໃຫຍ່ເປັນຜູ້ລົງລາຍເຊັນແລະປະທັບກາບໍລິສັດແຕ່ພຽງຜູ້ດຽວ; ຫລື
2. ໃຫ້ຜູ້ອຳນວຍການອື່ນສອງທ່ານລົງລາຍເຊັນຮ່ວມກັນແລະປະທັບກາບໍລິສັດ.

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌:www.edlgen.com.la

ສະພາບໍລິຫານ ໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນ ພິຈາລະນາອະນຸມັດ ສະພາບໍລິຫານຊຸດເກົ່າ ສືບຕໍ່ປະຕິບັດວຽກງານຂອງບໍລິສັດອີກວາລະໜຶ່ງ (2 ປີ) ແລະ ກຳນົດອຳນາດການລົງລາຍເຊັນ ຜູກພັນບໍລິສັດ.

ຫລັງຈາກຜູ້ອຳນວຍການໃຫຍ່ ລາຍງານໂດຍຫຍໍ້ ກ່ຽວກັບວາລະທີ 7 ແລ້ວ, ປະທານກອງປະຊຸມໄດ້ ເປີດໂອກາດ ເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມສາມາດຖາມໄດ້, ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດ ມີຄຳຖາມແຕ່ຢ່າງໃດ, ຈາກນັ້ນປະທານກອງປະຊຸມຈຶ່ງໄດ້ ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງເອົາສະພາບໍລິ ຫານຊຸດໃໝ່ເພື່ອປ່ຽນແທນສະພາບໍລິຫານທີ່ຄົບອາຍຸການ, ວາລະນີ້ກອງປະຊຸມຈະຕ້ອງລົງມະຕິອະນຸມັດ ດ້ວຍຄະແນນ ສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ກອງປະຊຸມໄດ້ພິຈາລະນາແລ້ວ ແລະມີມະຕິກອງປະຊຸມດັ່ງນີ້:

ມະຕິ: ກອງປະຊຸມເຫັນດີ ອະນຸມັດການຄັດເລືອກສະພາບໍລິຫານຊຸດໃໝ່ ແທນສະພາບໍລິຫານ ຊຸດເກົ່າ ທີ່ຄົບອາຍຸການ ເພື່ອສືບຕໍ່ປະ ຕິບັດໜ້າທີ່ເປັນກຳມະການ ຂອງ ບໍລິສັດອີກ ວາລະໜຶ່ງ, ໂດຍເລີ່ມນັບອາຍຸການແຕ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2017 ເປັນຕົ້ນ ໄປ, ມີລາຍຊື່ລະອຽດດັ່ງນີ້:

1. **ທ່ານ ປອ. ຄຳມະນີ ອິນທິລາດ ປະທານສະພາບໍລິຫານ**
2. **ທ່ານ ບຸນອູ້ມ ສີວັນເພັ່ງ ຮອງປະທານ**
3. **ທ່ານ ນາງ ລັດຕະນາ ປະທຸມວັນ ກຳມະການ**
4. **ທ່ານ ບຸນມາ ມະນີວົງ ກຳມະການ**
5. **ທ່ານ ນາງ ວານິດາ ສະຫວັດດີ ກຳມະການ**
6. **ທ່ານ ສີຈາດ ບຸດຊາກິດຕິລາດ ກຳມະການ**
7. **ທ່ານ ຮສ.ປອ. ກອງສີ ແສງມະນີ ກຳມະການອິດສະຫຼະ**
8. **ທ່ານ ສຈ.ປອ. ຄຳລືຊາ ນອນສະຫວັນ ກຳມະການອິດສະຫຼະ**
9. **ທ່ານ ຮສ. ຄຳເພີຍ ພົມມະຈັນ ກຳມະການອິດສະຫຼະ**

ແລະ ກຳນົດລາຍຊື່ຜູ້ ທີ່ມີອຳນາດລົງລາຍເຊັນຜູກພັນບໍລິສັດ ດັ່ງນີ້:

1. **ປະທານສະພາບໍລິຫານ ຫຼື ຮອງປະທານສະພາບໍລິຫານ ຫຼື ຜູ້ອຳນວຍການໃຫຍ່ ເປັນຜູ້ລົງ ລາຍເຊັນ ແລະ ປະທັບກາບໍລິສັດແຕ່ພຽງຜູ້ດຽວ; ຫລື**
2. **ໃຫ້ກຳມະການສະພາບໍລິຫານອື່ນສອງທ່ານ ລົງລາຍເຊັນຮ່ວມກັນ ແລະ ປະທັບກາບໍລິສັດ.**

ກອງປະຊຸມໄດ້ມີມະຕິ ດ້ວຍຄະແນນສຽງຫລາຍກວ່າເຄິ່ງໜຶ່ງ ຂອງຈຳນວນສຽງທັງໝົດຂອງຜູ້ຖື ຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- **ເຫັນດີຈຳນວນ 1.529.030.829 ສຽງ, ເທົ່າກັບ 99,195 ສ່ວນຮ້ອຍ ຂອງຈຳນວນສຽງ ທັງໝົດທີ່ເຂົ້າຮ່ວມກອງປະຊຸມ.**
- **ບໍ່ເຫັນດີຈຳນວນ 12.398.745 ສຽງ, ເທົ່າກັບ 0,804 ສ່ວນຮ້ອຍ ຂອງຈຳນວນສຽງທັງ ໝົດທີ່ເຂົ້າຮ່ວມກອງປະຊຸມ**

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌:www.edlgen.com.la

ວາລະທີ 8. ພິຈາລະນາ ແລະ ອະນຸມັດ ແຜນຍຸດທະສາດຂອງບໍລິສັດປີ 2016-2025.

ທ່ານຜູ້ອຳນວຍການໃຫຍ່ ໄດ້ສະເໜີຕໍ່ທີ່ປະຊຸມ ພິຈາລະນາ ແລະ ອະນຸມັດ ແຜນຍຸດທະສາດ ຂອງບໍລິສັດປີ 2016-2025 ເພື່ອເປັນການສືບຕໍ່ຂະຫຍາຍກຳລັງການຜະລິດໃຫ້ໄດ້ຕາມແຜນທີ່ວາງໄວ້, ບໍລິສັດ ຈຶ່ງໄດ້ປັບປຸງວິໃສທັດ, ພາລະກິດ ແລະ ແຜນຍຸດທະສາດ ແຕ່ປີ 2016-2025 ເພື່ອໃຫ້ເປັນບໍລິສັດນຳໜ້າອັນ ດັບໜຶ່ງຂອງ ສປປ ລາວ ໃນການຮັບປະກັນ ແລະ ການຕອບສະໜອງພະລັງງານໄຟຟ້າຢ່າງພຽງພໍ ແລະ ທັນ ການໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ ຂອງ ສປປ ລາວ ພ້ອມທັງຢືນຄຽງຄູ່ ແລະ ສົມທົບຢ່າງສະໜິດ ແໜ້ນກັບລັດວິສາຫະກິດໄຟຟ້າລາວໃນການສະໜອງພະລັງງານໄຟຟ້າຢ່າງໜັ້ນຄົງດ້ານປະລິມານ ແລະ ຄຸນ ນະພາບເພື່ອສະໜອງໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມໃນທົ່ວປະເທດ ແລະ ໃນຂົງເຂດອາຊຽນດ້ວຍ ລາຄາທີ່ສົມເຫດສົມຜົນ ແລະ ສ້າງມູນຄ່າໃຫ້ແກ່ຜູ້ຖືຮຸ້ນ.

ໃນປີ 2016-2025 ບໍລິສັດມີແຜນຈະຂະຫຍາຍທຸລະກິດພະລັງງານ ໂດຍການສືບຕໍ່ ເພີ່ມແຫຼ່ງ ຜະລິດໄຟຟ້າພະລັງນ້ຳຮ່ວມກັບ ລັດວິສາຫະກິດໄຟຟ້າລາວ ແລະ ບັນດາເຂື່ອນຜູ້ຜະລິດໄຟຟ້າເອກະລາດ ພ້ອມ ນັ້ນກໍ່ລິເລີ່ມພັດ ທະນາແຫຼ່ງຜະລິດພະລັງງານໄຟຟ້າ ຈາກແຫຼ່ງພະລັງງານທຳມະຊາດອື່ນ ເປັນຕົ້ນແມ່ນພະລັງງານ ໄຟຟ້າຖ່ານຫີນ ແລະ ພະລັງງານໄຟຟ້າໝຸນວຽນ (ພະລັງງານແສງຕາເວັນ, ພະລັງງານຈາກຂີ້ເຫຍື້ອ, ພະລັງງານ ລົມ) ເພື່ອຂະຫຍາຍຊ່ອງທາງການດຳເນີນທຸລະກິດ ແລະ ຫຼຸດຜ່ອນຄວາມສ່ຽງຈາກການລົງທຶນຈາກພະລັງງານນ້ຳ ພຽງຢ່າງດຽວ.

ພ້ອມດຽວກັນນັ້ນ, ບໍລິສັດຍັງຈະໄດ້ຊອກຫາແຫຼ່ງທຶນ ໂດຍການກູ້ຢືມຈາກບັນດາທະນາຄານ ແລະ ການອອກຈຳໜ່າຍຮຸ້ນກູ້ ເພື່ອມາລົງທຶນ ແລະ ພັດທະນາບັນດາເຂື່ອນໄຟຟ້າທີ່ຕ່າງໆເປັນເປົ້າໝາຍ ຂອງ ບໍລິສັດໃຫ້ເຕີບໃຫຍ່ຂະຫຍາຍຕົວໃນອະນາຄົດ.

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນ ພິຈາລະນາຮັບຮອງເອົາ ແຜນຍຸດທະສາດຂອງ ບໍລິສັດປີ 2016-2025.

ຫລັງຈາກຜູ້ອຳນວຍການໃຫຍ່ ລາຍງານໂດຍຫຍໍ້ ກ່ຽວກັບວາລະທີ 8 ແລ້ວ, ປະທານກອງປະຊຸມໄດ້ ເປີດໂອກາດ ເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມສາມາດຖາມໄດ້, ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດ ມີຄຳຖາມແຕ່ຢ່າງໃດ, ຈາກນັ້ນປະທານກອງປະຊຸມຈຶ່ງໄດ້ ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ອະນຸມັດແຜນຍຸດທະ ສາດຂອງບໍລິສັດປີ 2016-2025, ວາລະນີ້ກອງປະຊຸມຈະຕ້ອງລົງມະຕິອະນຸມັດ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິກອງປະຊຸມດັ່ງນີ້:

ມະຕິ: ກອງປະຊຸມມີມະຕິເຫັນດີ ຮັບຮອງ ແຜນຍຸດທະສາດ ຂອງ ບໍລິສັດ ປີ 2016-2025. ກອງ ປະຊຸມໄດ້ມີມະຕິ ດ້ວຍຄະແນນສຽງຫລາຍກວ່າເຄິ່ງໜຶ່ງ ຂອງຈຳນວນສຽງທັງໝົດຂອງຜູ້ ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- **ເຫັນດີຈຳນວນ 1.529.035.433 ສຽງ, ເທົ່າກັບ 99,195 ສ່ວນຮ້ອຍ ຂອງຈຳນວນສຽງ ທັງໝົດທີ່ເຂົ້າຮ່ວມກອງປະຊຸມ.**
- **ບໍ່ເຫັນດີຈຳນວນ 12.394.141 ສຽງ, ເທົ່າກັບ 0,804 ສ່ວນຮ້ອຍ ຂອງຈຳນວນສຽງ ທັງໝົດທີ່ເຂົ້າຮ່ວມກອງປະຊຸມ.**

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌:www.edlgen.com.la

ວາລະທີ 9. ພິຈາລະນາ ແລະ ອະນຸມັດການສ້າງຕັ້ງ ບໍລິສັດ ບໍລິການຄຸ້ມຄອງການຜະລິດ ແລະ ບຳລຸງຮັກສາອີດີແອວ ເຈັນ ຈຳກັດຜູ້ດຽວ.

ທ່ານຜູ້ອຳນວຍການໃຫຍ່ ໄດ້ສະເໜີຕໍ່ທີ່ປະຊຸມ ພິຈາລະນາ ແລະ ອະນຸມັດການສ້າງຕັ້ງ ບໍລິສັດ ບໍລິການຄຸ້ມຄອງການຜະລິດ ແລະ ບຳລຸງຮັກສາອີດີແອວເຈັນ ຈຳກັດຜູ້ດຽວ ເພື່ອເປັນການຂະຫຍາຍທຸລະກິດໃຫ້ເຕີບໃຫຍ່ຂະຫຍາຍຕົວຕາມພາລະບົດບາດ ແລະ ແຜນຍຸດທະສາດ ຂອງ ບໍລິສັດເທື່ອລະກ້າວ, ບໍລິສັດໄດ້ເລັ່ງໃສ່ທຸລະກິດການໃຫ້ບໍລິການໂດຍສະເພາະການຄຸ້ມຄອງການຜະລິດ ແລະ ບຳລຸງຮັກສາໂຄງການເຂື່ອນໄຟຟ້າຕ່າງໆ ພາຍໃນປະເທດທີ່ເປັນໂຄງການເຂື່ອນໄຟຟ້າຈາກຜູ້ຜະລິດໄຟຟ້າເອກະລາດ (IPPs) ແລະ ຂອງບໍລິສັດທີ່ຄຸ້ມຄອງດ້ວຍຕົນເອງ, ຈຶ່ງໄດ້ຕົກລົງເຫັນດີທາງດ້ານຫຼັກການຄົ້ນຄວ້າການສ້າງຕັ້ງ ບໍລິສັດ ບໍລິການຄຸ້ມຄອງການຜະລິດ ແລະ ບຳລຸງຮັກສາອີດີແອວເຈັນ ຈຳກັດຜູ້ດຽວ ໃນຖານະເປັນບໍລິສັດໃນເຄືອ (ບໍລິສັດລູກ), ໂດຍມີພາລະບົດບາດແລະໜ້າວຽກຂອງບໍລິສັດດັ່ງກ່າວຢ່າງລະອຽດ; ຊຶ່ງໄດ້ພິຈາລະນາທຶນຈົດທະບຽນ ຈຳນວນ 2,4 ຕື້ກີບ ແລະ ແບ່ງຮຸ້ນອອກເປັນ ຈຳນວນ 600.000 ຮຸ້ນ ແຕ່ລະຮຸ້ນມີມູນຄ່າເທົ່າກັບ 4.000 ກີບ ເພື່ອສ້າງຕັ້ງ ບໍລິສັດ ບໍລິການຄຸ້ມຄອງການຜະລິດ ແລະບຳລຸງຮັກສາອີດີແອວເຈັນ ຈຳກັດຜູ້ດຽວ.

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນ ພິຈາລະນາຮັບຮອງເອົາການສ້າງຕັ້ງ ບໍລິສັດ ບໍລິການຄຸ້ມຄອງການຜະລິດ ແລະ ບຳລຸງຮັກສາອີດີແອວເຈັນ ຈຳກັດຜູ້ດຽວ.

ຫລັງຈາກຜູ້ອຳນວຍການໃຫຍ່ ລາຍງານໂດຍຫຍໍ້ ກ່ຽວກັບວາລະທີ 9 ແລ້ວ, ປະທານກອງປະຊຸມໄດ້ເປີດໂອກາດ ເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມສາມາດຖາມໄດ້, ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດມີຄຳຖາມແຕ່ຢ່າງໃດ, ຈາກນັ້ນປະທານກອງປະຊຸມຈຶ່ງໄດ້ ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ອະນຸມັດການສ້າງຕັ້ງ ບໍລິສັດ ບໍລິການຄຸ້ມຄອງການຜະລິດ ແລະ ບຳລຸງຮັກສາອີດີແອວເຈັນ ຈຳກັດຜູ້ດຽວ, ວາລະນີ້ກອງປະຊຸມຈະຕ້ອງລົງມະຕິອະນຸມັດ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ກອງປະຊຸມໄດ້ພິຈາລະນາແລ້ວ ແລະມີມະຕິກອງປະຊຸມດັ່ງນີ້:

ມະຕິ: ກອງປະຊຸມມີມະຕິເຫັນດີອະນຸມັດການສ້າງຕັ້ງ ບໍລິສັດ ບໍລິການຄຸ້ມຄອງການຜະລິດ ແລະ ບຳລຸງຮັກສາອີດີແອວເຈັນ ຈຳກັດຜູ້ດຽວ, ດ້ວຍຄະແນນຫຼາຍກວ່າ (2/3) ແລະຖືຮຸ້ນລວມກັນຫຼາຍກວ່າ (80%) ຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດຂອງບໍລິສັດ, ໂດຍມີຄະແນນສຽງດັ່ງນີ້:

ກ. ຈຳນວນຄົນ (ສຽງ) ຂອງຜູ້ຖືຮຸ້ນ ທີ່ເຂົ້າຮ່ວມກອງປະຊຸມ:

- **ເຫັນດີ 601 ຄົນ (ສຽງ), ເທົ່າກັບ 98,85 ສ່ວນຮ້ອຍ ທຽບໃສ່ຈຳນວນຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ.**
- **ບໍ່ເຫັນດີ 7 ຄົນ (ສຽງ), ເທົ່າກັບ 1,15 ສ່ວນຮ້ອຍ ທຽບໃສ່ຈຳນວນຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ**

ຂ. ຈຳນວນຮຸ້ນ (ສຽງ) ຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ:

- **ເຫັນດີ 1.529.021.129 ຮຸ້ນ (ສຽງ), ເທົ່າກັບ 91,050 ສ່ວນຮ້ອຍທຽບໃສ່ຈຳນວນຮຸ້ນທີ່ຖອກແລ້ວທັງໝົດຂອງບໍລິສັດ.**

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປລາວ. ຕູ້ ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌:www.edlgen.com.la

- **ບໍ່ເຫັນດີ 12.408.445 ຮຸ້ນ (ສຽງ), ເທົ່າກັບ 0,738 ສ່ວນຮ້ອຍທຽບໃສ່ຈຳນວນຮຸ້ນທີ່ຖອກແລ້ວທັງໝົດຂອງບໍລິສັດ.**

ຫລັງຈາກກອງປະຊຸມໄດ້ພິຈາລະນາ ຄົບວາລະການປະຊຸມແລ້ວ, ປະທານກອງປະຊຸມ ໄດ້ສະເໜີຖາມ ມີຜູ້ຖືຮຸ້ນທ່ານໃດມີຄຳຖາມອີກບໍ່, ສາມາດຖາມໄດ້, ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດ ມີຄຳເຫັນ ຫລືມີຄຳຖາມແຕ່ຢ່າງໃດ.

ໃນຕອນທ້າຍຂອງການປະຊຸມ ປະທານກອງປະຊຸມ ໄດ້ແຈ້ງໃຫ້ທີ່ປະຊຸມຊາບກ່ຽວກັບຈຳນວນຜູ້ຖືຮຸ້ນເຂົ້າຮ່ວມປະຊຸມຮອດເວລາປິດກອງປະຊຸມ, ມີຈຳນວນຜູ້ຖືຮຸ້ນເຂົ້າຮ່ວມປະຊຸມດ້ວຍຕົນເອງມີຈຳນວນ 93 ຄົນ ແລະ ມີຜູ້ຕາງໜ້າເຂົ້າຮ່ວມປະຊຸມແທນຜູ້ຖືຮຸ້ນຈຳນວນ 515 ຄົນ ລວມຜູ້ຖືຮຸ້ນເຂົ້າຮ່ວມກອງປະຊຸມທັງໝົດ 608 ຄົນ ຖືຮຸ້ນລວມກັນທັງໝົດ 1.541.429.574 ຮຸ້ນ ເທົ່າກັບ 91,79 ສ່ວນຮ້ອຍ ຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດ ຂອງ ບໍລິສັດ.

ຕໍ່ມາປະທານກອງປະຊຸມ ໄດ້ກ່າວຄຳຂອບໃຈບັນດາທ່ານຜູ້ຖືຮຸ້ນທຸກທ່ານທີ່ໄດ້ມາຮ່ວມກອງປະຊຸມ ໃນມື້ນີ້ ແລະຂໍເຊີນທ່ານເຂົ້າຮ່ວມກອງປະຊຸມສະໄໝສາມັນຜູ້ຖືຮຸ້ນປະຈຳປີ 2018 ໃນຕົ້ນປີ 2019 ແລະ ອວຍພອນ ໄຊບັນດາທ່ານຄະນະສະພາບໍລິຫານ, ຈົ່ງມີສຸຂະພາບເຂັ້ມແຂງ ປະສົບຜົນສຳເລັດໃນໜ້າທີ່ວຽກງານ, ຖືຮຸ້ນທຸກທ່ານ ແລະ ແຂກທີ່ມີກຽດທຸກທ່ານຈົ່ງມີສຸຂະພາບເຂັ້ມແຂງປະສົບຜົນສຳເລັດໃນໜ້າທີ່ວຽກງານທຸກປະການ.

ກອງປະຊຸມໄດ້ພິຈາລະນາຄົບຖ້ວນຕາມວາລະກອງປະຊຸມແລ້ວ, ບໍ່ມີເລື່ອງໃດທີ່ຈະພິຈາລະນາຕື່ມ, ປະທານກອງປະຊຸມ ໄດ້ກ່າວປິດກອງປະຊຸມເວລາ 16:30 ໂມງ.

ປະທານກອງປະຊຸມ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ EDL-Generation Public Company

ປອ. ຄຳມະນີ ອິນທິລາດ

ຮັບຮອງຖືກຕ້ອງ

ບຸນອູ້ມ ສີວັນເພັ່ງ

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປລາວ. ຕູ້ ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌:www.edlgen.com.la

ລາຍງານການເງິນປະຈຳປີ 2018

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌:www.edlgen.com.la

	ບົດອະທິບາຍ	ເອກະສານລາຍງານການເງິນ ແບບລວມ 31 ທັນວາ 2018	2017	ເອກະສານລາຍງານການເງິນ ແບບແຍກ 31 ທັນວາ 2018	2017
			(ລ້ານກີບ)		
ຊັບສິນ					
ເງິນລົງທຶນ ໃນບໍລິສັດລູກ	4	-	-	85.160	82.760
ເງິນລົງທຶນ ໃນວິສາຫະກິດ ຮ່ວມ ແລະ ບໍລິສັດຮຸ້ນສ່ວນ	5	3.705.289	2.606.394	3.705.289	2.606.394
ເງິນຈ່າຍລ່ວງໜ້າສຳລັບຊັບສິນພາຍໃຕ້					
ສັນຍາສຳປະທານ ແລະ ເງິນລົງທຶນ	6, 23	6.298.672	4.436.159	7.104.200	5.101.121
ເງິນຈ່າຍລ່ວງໜ້າສຳລັບສັນຍາແລກປ່ຽນອັດຕາດອກເບ້ຍ collar		22.455	36.058	22.455	36.058
ຊັບສິນຢູ່ພາຍໃຕ້ການສຳປະທານ	7	9.735.008	9.790.198	9.294.535	9.408.829
ໜີ້ຕ້ອງຮັບສັນຍາແລກປ່ຽນ Swap		26.617	-	26.617	-
ຈ່າຍເງິນລ່ວງໜ້າໃຫ້ຜູ້ສະໜອງສຳລັບໂຄງການກໍ່ສ້າງ		341.075	183.680	-	-
ຊັບສິນທີ່ບໍ່ໝຸນວຽນອື່ນໆ		102.289	72.872	102.289	72.872
ລວມຊັບສິນບໍ່ໝຸນວຽນ		**20.231.405**	**17.125.361**	**20.340.545**	**17.308.034**
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ	8	642.106	756.738	550.978	678.322
ເງິນລົງທຶນໄລຍະສັ້ນ	9	110.994	955.301	110.994	955.301
ເງິນກູ້ຢືມໄລຍະສັ້ນໃຫ້ພາກສ່ວນທີ່ກ່ຽວຂ້ອງ	23	486.666	463.392	486.666	463.392
ໜີ້ຕ້ອງຮັບການຄ້າ ແລະ ອື່ນໆ	10, 23	429.439	149.452	415.524	144.598
ເງິນຈ່າຍລ່ວງໜ້າສຳລັບສັນຍາແລກປ່ຽນ					
ອັດຕາດອກເບ້ຍ collar ທີ່ເຖິງກຳນົດພາຍໃນປີ		14.785	14.581	14.785	14.581
ອາໄຫຼ່ ແລະ ເຄື່ອງໃນສາງ		3.941	4.458	3.941	4.458
ຊັບສິນໝຸນວຽນອື່ນໆ		76.192	149.910	74.594	35.594
ລວມຊັບສິນໝຸນວຽນ		**1.764.123**	**2.493.832**	**1.657.482**	**2.296.246**
ລວມຍອດຊັບສິນ		**21.995.528**	**19.619.193**	**21.998.027**	**19.604.280**

ທ່ານ ນາງ ລັດຕະນາ ປະທຸມວັນ
ຜູ້ອຳນວຍການໃຫຍ່
ວັນທີ: 18 ມີນາ 2019

ທ່ານ ບຸນສະໜອງ ສຸດທິດາຣາ
ຮອງຜູ້ອຳນວຍການໃຫຍ່ - ລາຍງານການເງິນ
ວັນທີ: 18 ມີນາ 2019

ບົດອະທິບາຍ ປະກອບເຫຼົ່ານີ້ແມ່ນສ່ວນທີ່ສຳຄັນຂອງຂໍ້ມູນທາງດ້ານການເງິນ

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປລາວ. ຕູ້ ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌:www.edlgen.com.la

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ແລະ ບໍລິສັດລູກ

ໃບລາຍງານຖານະການເງິນ

	ບົດອະທິບາຍ	ເອກະສານລາຍງານການເງິນ ແບບລວມ 31 ທັນວາ 2018	2017	ເອກະສານລາຍງານການເງິນ ແບບແຍກ 31 ທັນວາ 2018	2017
			(ລ້ານກີບ)		
ທຶນຂອງຜູ້ຖືຮຸ້ນ					
ຮຸ້ນທຶນ/ທຶນຈົດທະບຽນ	11	6.717.215	6.717.215	6.717.215	6.717.215
ສ່ວນເພີ່ມມູນຄ່າຮຸ້ນ	11	985.621	985.621	985.621	985.621
ຄັງສະສົມຕາມລະບຽບການ	12	471.423	463.944	471.423	463.944
ຜົນຕ່າງຈາກການແປງຄ່າ ເອກະສານລາຍງານການເງິນ		11.758	2.302	11.758	2.302
ກຳໄລສະສົມ		612.482	1.040.000	622.768	1.042.447
ສ່ວນຂອງທຶນຂອງຜູ້ຖືຮຸ້ນ ຂອງບໍລິສັດ		8.798.499	9.209.082	8.808.785	9.211.529
ສ່ວນໄດ້ເສຍທີ່ບໍ່ມີອຳນາດການຄວບຄຸມ		(2.273)	(263)	-	-
ລວມຍອດທຶນຂອງຜູ້ຖືຮຸ້ນທັງໝົດ		**8.796.226**	**9.208.819**	**8.808.785**	**9.211.529**
ໜີ້ສິນ					
ເງິນກູ້ໄລຍະຍາວ	13, 23	3.678.445	4.206.348	3.678.445	4.206.348
ຮຸ້ນກູ້	14	7.532.621	4.152.882	7.532.621	4.152.882
ໜີ້ຕ້ອງສິ່ງສັນຍາແລກປ່ຽນ SWAP		-	3.856	-	3.856
ລວມໜີ້ສິນບໍ່ໝຸນວຽນ		**11.211.066**	**8.363.086**	**11.211.066**	**8.363.086**
ເງິນກູ້ໄລຍະສັ້ນ	13	195.843	870.573	195.843	870.573
ເງິນກູ້ໄລຍະຍາວທີ່ເຖິງກຳນົດຊຳລະພາຍໃນປີ	13, 23	588.286	529.912	588.286	529.912
ຮຸ້ນກູ້ທີ່ເຖິງກຳນົດຊຳລະພາຍໃນໜຶ່ງປີ	14	401.145	-	401.145	-
ໜີ້ຕ້ອງສິ່ງການຄ້າ ແລະ ອື່ນໆ		624.754	535.079	616.197	517.911
ລາຍຈ່າຍຄ້າງຈ່າຍ	15	176.496	111.222	175.887	110.767
ໜີ້ສິນໝຸນວຽນອື່ນໆ		1.712	502	818	502
ລວມຍອດໜີ້ສິນໝຸນວຽນ		**1.988.236**	**2.047.288**	**1.978.176**	**2.029.665**
ລວມຍອດໜີ້ສິນ		**13.199.302**	**10.410.374**	**13.189.242**	**10.392.751**
ລວມຍອດທຶນຕົນເອງ ແລະ ໜີ້ສິນ		**21.995.528**	**19.619.193**	**21.998.027**	**19.604.280**

ທ່ານ ນາງ ລັດຕະນາ ປະທຸມວັນ
ຜູ້ອຳນວຍການໃຫຍ່
ວັນທີ: 18 ມີນາ 2019

ທ່ານ ບຸນສະຫງວງ ສຸດທິດາຣາ
ຮອງຜູ້ອຳນວຍການໃຫຍ່ - ສາຍງານການເງິນ
ວັນທີ: 18 ມີນາ 2019

ບົດອະທິບາຍ ປະກອບເຫຼົ່ານີ້ແມ່ນສ່ວນທີ່ສຳຄັນຂອງຂໍ້ມູນທາງດ້ານການເງິນ

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌:www.edlgen.com.la

ໃບລາຍງານຜົນໄດ້ຮັບ

	ບົດອະທິບາຍ	ເອກະສານລາຍງານການເງິນ ແບບລວມ ສຳລັບປີສິ້ນສຸດ 31 ທັນວາ 2018	ເອກະສານລາຍງານການເງິນ ແບບລວມ ສຳລັບປີສິ້ນສຸດ 31 ທັນວາ 2017	ເອກະສານລາຍງານການເງິນ ແບບແຍກ ສຳລັບປີສິ້ນສຸດ 31 ທັນວາ 2018	ເອກະສານລາຍງານການເງິນ ແບບແຍກ ສຳລັບປີສິ້ນສຸດ 31 ທັນວາ 2017
			(ລ້ານກີບ)		
ສືບຕໍ່ດຳເນີນງານ					
ຂາຍ	23	1.137.430	1.219.825	1.116.867	1.215.414
ຕົ້ນທຶນໃນການຂາຍ	16	(532.735)	(489.057)	(520.271)	(485.871)
ກຳໄລລວມ		604.695	730.768	596.596	729.543
ລາຍຮັບອື່ນໆ		26.476	25.710	26.476	25.710
ລາຍຈ່າຍໃນການດຳເນີນງານ ແລະ ບໍລິຫານ	16	(169.215)	(140.850)	(162.360)	(136.226)
ຂາດທຶນ ຈາກອັດຕາແລກປ່ຽນ		(429.012)	(47.301)	(417.919)	(49.738)
ກຳໄລ ຂອງຮຸ້ນຈາກເງິນລົງທຶນໃນວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ	5	620.558	410.703	620.558	410.703
ກຳໄລຈາກການດຳເນີນງານ		**653.502**	**979.030**	**663.351**	**979.992**
ລາຍຈ່າຍທາງການເງິນ	17	(588.553)	(491.902)	(588.553)	(491.902)
ກຳໄລກ່ອນອາກອນກຳໄລ		**64.949**	**487.128**	**74.798**	**488.090**
ອາກອນກຳໄລ	18	-	(15.943)	-	(15.943)
ກຳໄລໃນປີ		**64.949**	**471.185**	**74.798**	**472.147**
ກຳໄລທີ່ໄດ້ຮັບ:					
ເຈົ້າຂອງບໍລິສັດແມ່		66.959	472.448	74.798	472.147
ສ່ວນໄດ້ເສຍທີ່ບໍ່ມີອຳນາດການຄວບຄຸມ		(2.010)	(1.263)	-	-
ກຳໄລໃນປີ		**64.949**	**471.185**	**74.798**	**472.147**
ກຳໄລຕໍ່ຮຸ້ນ					
ກຳໄລພື້ນຖານຕໍ່ຮຸ້ນ (ກີບ)	19	39,87	281,34	44,54	281,16

ທ່ານ ນ.ງ ລັດຕະນາ ປະທຸມວັນ
ຜູ້ອຳນວຍການໃຫຍ່
ວັນທີ: 18 ມີນາ 2019

ທ່ານ ບຸນສະຫງວງ ສຸດທິດາຣາ
ຮອງຜູ້ອຳນວຍການໃຫຍ່ - ສາຍງານການເງິນ
ວັນທີ: 18 ມີນາ 2019

ບົດອະທິບາຍ ປະກອບເຫຼົ່ານີ້ແມ່ນສ່ວນທີ່ສຳຄັນຂອງຂໍ້ມູນທາງດ້ານການເງິນ

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປລາວ. ຕູ້ ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌:www.edlgen.com.la

	ບົດອະທິບາຍ	ເອກະສານລາຍງານການເງິນແບບລວມ ສ່ວນຂອງຜູ້ຖືຮຸ້ນບໍລິສັດ ທຶນ ຈົດທະບຽນ	ສ່ວນເພີ່ມ ມູນຄ່າຮຸ້ນ	ຄັງສະສົມຕາມ ລະບຽບການ	ຜົນຕ່າງຈາກການ ແປງຄ່າເງິນ	ກຳໄລ ສະສົມ	ລວມ	ສ່ວນໄດ້ເສຍ ທີ່ບໍ່ມີອຳນາດ ການຄວບຄຸມ	ລວມຍອດທຶນ ຂອງຜູ້ຖືຮຸ້ນ
					(ລ້ານກີບ)				
ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2017									
ຍອດເຫຼືອໃນວັນທີ 1 ມັງກອນ 2017		6.717.215	985.621	416.729	(1.342)	1.068.179	9.186.402	-	9.186.402
ຊື້ສ່ວນໄດ້ເສຍທີ່ບໍ່ມີອຳນາດໃນການຄວບຄຸມຂອງບໍລິສັດລູກ		-	-	-	-	-	-	1.000	1.000
ກຳໄລໃນປີ		-	-	-	-	472.448	472.448	(1.263)	471.185
ຜົນຕ່າງຈາກການແປງຄ່າເງິນ		-	-	-	3.644	-	3.644	-	3.644
ຈ່າຍເງິນປັນຜົນ	*20*	-	-	-	-	(453.412)	(453.412)	-	(453.412)
ໂອນເຂົ້າຄັງສຳຮອງຕາມລະບຽບການ	*12*	-	-	47.215	-	(47.215)	-	-	-
ຍອດເຫຼືອໃນວັນທີ 31 ທັນວາ 2017		**6.717.215**	**985.621**	**463.944**	**2.302**	**1.040.000**	**9.209.082**	**(263)**	**9.208.819**
ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2018		6.717.215	985.621	463.944	2.302	1.040.000	9.209.082	(263)	9.208.819
ຍອດເຫຼືອໃນວັນທີ 1 ມັງກອນ 2018									
ກຳໄລໃນປີ		-	-	-	-	66.959	66.959	(2.010)	64.949
ຜົນຕ່າງຈາກການແປງຄ່າເງິນ		-	-	-	9.456	-	9.456	-	9.456
ຈ່າຍເງິນປັນຜົນ	*20*	-	-	-	-	(486.998)	(486.998)	-	(486.998)
ໂອນເຂົ້າຄັງສຳຮອງຕາມລະບຽບການ	*12*	-	-	7.479	-	(7.479)	-	-	-
ຍອດເຫຼືອໃນວັນທີ 31 ທັນວາ 2018		**6.717.215**	**985.621**	**471.423**	**11.758**	**612.482**	**8.798.499**	**(2.273)**	**8.796.226**

ບົດອະທິບາຍ ປະກອບເຫຼົ່ານີ້ແມ່ນສ່ວນທີ່ສຳຄັນຂອງຂໍ້ມູນທາງດ້ານການເງິນ

ໂທລະສັບ, ໂທລະສານ, ອີເມວ, ເວັບໄຊ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊ:www.edlgen.com.la

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ແລະ ບໍລິສັດລູກ
ໃບລາຍງານສ່ວນປ່ຽນແປງຂອງທຶນ

	ບົດອະທິບາຍ	ທຶນ ຈົດທະບຽນ	ສ່ວນເພີ່ມ ມູນຄ່າຮຸ້ນ	ຄັງສະສົມຕາມ ລະບຽບການ	ຜົນຕ່າງຈາກການ ແປງຄ່າເງິນ	ກຳໄລ ສະສົມ	ລວມຍອດທຶນ ຂອງຜູ້ຖືຮຸ້ນ

ໃບລາຍງານກະແສເງິນສົດ

	ບົດອະທິບາຍ	ເອກະສານລາຍງານການເງິນ ແບບລວມ ສຳລັບປີສິ້ນສຸດ 31 ທັນວາ 2018	ເອກະສານລາຍງານການເງິນ ແບບລວມ ສຳລັບປີສິ້ນສຸດ 31 ທັນວາ 2017	ເອກະສານລາຍງານການເງິນ ແບບແຍກ ສຳລັບປີສິ້ນສຸດ 31 ທັນວາ 2018	ເອກະສານລາຍງານການເງິນ ແບບແຍກ ສຳລັບປີສິ້ນສຸດ 31 ທັນວາ 2017
		(ລ້ານກີບ)			
ກະແສເງິນສົດຈາກ ກິດຈະກຳທາງການເງິນ					
ລາຍຈ່າຍທາງການເງິນ		(508.471)	(520.139)	(508.471)	(520.139)
ຈ່າຍເງິນສົດ ສຳລັບຕົ້ນທຶນການອອກຮຸ້ນກູ້		(66.163)	-	(66.163)	-
ຈ່າຍເງິນປັນຜົນ		(208.466)	(257.681)	(208.466)	(257.681)
ຮັບເງິນສົດຈາກການກູ້ຢືມໄລຍະສັ້ນ	13	302.621	870.090	302.621	870.090
ຮັບເງິນສົດຈາກການກູ້ຢືມໄລຍະຍາວ	13	332.440	177.022	332.440	177.022
ຮັບເງິນສົດຈາກການອອກຮຸ້ນກູ້	13	3.532.989	-	3.532.989	-
ຊຳລະເງິນກູ້ໄລຍະສັ້ນ	13	(995.875)	-	(995.875)	-
ຊຳລະເງິນກູ້ໄລຍະຍາວ	13	(917.517)	(512.820)	(917.517)	(512.820)
ເງິນສົດສຸດທິ ທີ່ໄດ້ຈາກ(ທີ່ໃຊ້ໃນ)ກິດຈະກຳທາງການເງິນ		**1.471.558**	**(243.528)**	**1.471.558**	**(243.528)**
ເງິນສົດ ແລະ ທຽບເທົ່າເງິນສົດ ຫຼຸດລົງສຸດທິ		(152.145)	(1.495.858)	(164.857)	(1.559.919)
ຜົນກະທົບຂອງອັດຕາແລກປ່ຽນກັບຍອດເຫຼືອ ຂອງເງິນຕາຕ່າງປະເທດໃນມື ໃນມື້ສິ້ນປີ		37.513	2.961	37.513	2.961
ເງິນສົດ ແລະ ທຽບເທົ່າເງິນສົດ ໃນຕົ້ນປີ		756.738	2.249.635	678.322	2.235.280
ເງິນສົດ ແລະ ທຽບເທົ່າເງິນສົດ ໃນທ້າຍປີ	8	**642.106**	**756.738**	**550.978**	**678.322**
ລາຍການເຄື່ອນໄຫວທີ່ບໍ່ແມ່ນເງິນສົດ					
ໜີ້ຕ້ອງລົ້ງ ເງິນລົງທຶນໃນບໍ່ານ້ອງ		5.537	-	5.537	-
ຊຳລະສະສາງບັນຊີເງິນຈ່າຍລ່ວງໜ້າ ສຳລັບຊັບສິນ ພາຍໃຕ້ສັນຍາສຳປະທານ ແລະ ເງິນລົງທຶນ ກັບ					
- ໄລຍະສັ້ນໃຫ້ພາກສ່ວນທີ່ກ່ຽວຂ້ອງກູ້ຢືມ		42.230	-	42.230	-
- ຈ່າຍເງິນປັນຜົນ		23.976	-	23.976	-
ໜີ້ຕ້ອງລົ້ງຊື້ຊັບສິນພາຍໃຕ້ສັນຍາສຳປະທານ		602.819	427.431	602.819	427.431
ຊຳລະສະສາງກັບບັນຊີໜີ້ຕ້ອງຮັບການຄ້ຳ ແລະ ໜີ້ຕ້ອງຮັບອື່ນໆ ກັບ					
- ຈ່າຍເງິນປັນຜົນ		116.000	195.731	116.000	195.731
- ເງິນກູ້ໄລຍະຍາວຈາກພາກສ່ວນທີ່ກ່ຽວຂ້ອງ		11.027	19.364	11.027	19.364
ຊຳລະສະສາງເງິນກູ້ໄລຍະສັ້ນກັບພາກສ່ວນທີ່ກ່ຽວຂ້ອງກັບ					
- ຈ່າຍເງິນປັນຜົນ		253.012	-	253.012	-
ຊຳລະສະສາງບັນຊີໜີ້ຕ້ອງລົ້ງໃນການຊື້ຊັບສິນ ພາຍໃຕ້ສັນຍາ ສຳປະທານ ກັບເງິນກູ້ໄລຍະຍາວກັບພາກສ່ວນທີ່ກ່ຽວຂ້ອງ		-	3.995.884	-	3.995.884

ທ້າວ ບຸນ ສີດາຕະນາ ປະທຸມວັນ
ຜູ້ອຳນວຍການໃຫຍ່
ວັນທີ: 18 ມີນາ 2019

ທ່ານ ບຸນສະຫງວງ ສຸດທິດາຣາ
ຮອງຜູ້ອຳນວຍການໃຫຍ່ - ສາຍງານການເງິນ
ວັນທີ: 18 ມີນາ 2019

ບົດອະທິບາຍ ປະກອບເຫຼົ່ານີ້ແມ່ນສ່ວນທີ່ສຳຄັນຂອງຂໍ້ມູນທາງດ້ານການເງິນ

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປລາວ. ຕູ້ ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌:www.edlgen.com.la

ໃບມອບສັນທະ
PROXY

ຂຽນທີ່.....
Written at

ວັນທີ.....ເດືອນ.....ປີ.....

(1) ຂ້າພະເຈົ້າ.....ສັນຊາດ.....ວັນທີ,ເດືອນ ແລະ ປີເກີດ ..... I/We Nationality date, month and year of birth

ບັດປະຈຳຕົວເລກທີ.....ຢູ່ເຮືອນເລກທີ.....ບ້ານ.....ຖະໜົນ.....
ID card number Reside at Village Road

ເມືອງ.....ແຂວງ.....
District Province

(2) ເປັນຜູ້ຖືຮຸ້ນຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ.
Being a shareholder of EDL-Generation Public Company.

ໂດຍຖືຮຸ້ນສາມັນຈຳນວນລວມທັງໝົດ.....ຮຸ້ນຊຶ່ງເທົ່າກັບຈຳນວນສຽງທີ່ຈະລົງຄະແນນສຽງໄດ້.
holding the ordinary shares in the total amount of shares, which are equivalent to the same number of votes.

(3) ຂໍມອບໝາຍໃຫ້
Hereby appoint

☐ (1) ທ່ານ/ທ່ານນາງ.....ອາຍຸ.....ປີ, ຢູ່ເຮືອນເລກທີ..... Mr./Ms.
ຖະໜົນ.....ບ້ານ.....ເມືອງ.....
Road Village District
ແຂວງ.....ລະຫັດໄປສະນີ.....ຫຼື
Province Postal Code or

☐ (2) ທ່ານ ສຈ. ປອ. ຄຳລືຊາ ນວນສະຫວັນ ອາຍຸ 65 ປີ, ຢູ່ເຮືອນເລກທີ 44
Prof. Dr. Khamlusa NOUANSAVAHN age 65 years, resides at 44
ຖະໜົນ ດົງປ່າແລບ ບ້ານ ດົງປ່າແລບ ເມືອງຈັນທະບູລີ.....
Road DongpalapVillage District Chanthabouly
ແຂວງ ນະຄອນຫຼວງວຽງຈັນ ລະຫັດໄປສະນີ 2392 ຫຼື
Province Vientiane Capital Postal Code 392 or

☐ (3) ທ່ານ ຮສ. ປອ. ກອງສີ ແສງມະນີ ອາຍຸ 66 ປີ, ຢູ່ເຮືອນເລກທີ 645
Assoc Prof. Dr. Kongsy SENGMANY age 66 years, resides at 645
ຖະໜົນ ໂພນຕ້ອງ ບ້ານ ໂພນຕ້ອງຈອມມະນີ ເມືອງຈັນທະບູລີ
Road Phongtong Village PhotongChommani District Chathabouly
ແຂວງ ນະຄອນຫຼວງວຽງຈັນ ລະຫັດໄປສະນີ 2392 ຫຼື
Province Vientiane Capital Postal Code 2392 or

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປລາວ. ຕູ້ ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌:www.edlgen.com.la

☐ (4)ທ່ານ ຣສ. ຄຳເພັຍ ພົມມະຈັນ ອາຍຸ 58 ປີ,ຢູ່ເຮືອນເລກທີ.....074.....

Assoc. Prof. Khampheui PHOMMACHANH age 58 years, resides at 074

ຖະໜົນດົງໂດກ ບ້ານ ດົງໂດກ ເມືອງ ໄຊທານີ

Road Dongdok Village Dongdok District Xaythany

ແຂວງ ນະຄອນຫຼວງວຽງຈັນ ລະຫັດໄປສະນີ 2392

Vientiane Capital Postal Code 2392

ຄົນໃດຄົນໜຶ່ງພຽງຄົນດຽວ ເປັນຜູ້ຕາງໜ້າຂອງຂ້າພະເຈົ້າ ເພື່ອເຂົ້າຮ່ວມປະຊຸມ ແລະລົງຄະແນນສຽງແທນຂ້າພະເຈົ້າ ໃນກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2018 ໃນວັນທີ 09 ເມສາ 2019 ເວລາ 15:00 ໂມງ.

Any one of them to be my/our proxy to attend and vote on my/our behalf at the Annual General Meeting for the Year 2018 to be on 09 April 2019 at 3:00 pm.

ສະຖານທີ່ຫ້ອງປະຊຸມ ຊັ້ນທີ 1 ອາຄານສຳນັກງານ ລັດວິສາຫະກິດໄຟຟ້າລາວ, ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນຫຼືທີ່ໄດ້ເລື່ອນໄປໃນວັນ, ເວລາແລະສະຖານທີ່ອື່ນດ້ວຍ.

At meeting room, 1st floor, EDL Headquarter building, Lao-Thai Friendship Road, Thongkang Village, Sisattanak District, Vientiane Capital or any adjournment at any date, time and place thereof.

(4) ຂ້າພະເຈົ້າຂໍມອບໝາຍໃຫ້ຜູ້ຕາງໜ້າລົງຄະແນນສຽງແທນຂ້າພະເຈົ້າໃນກອງປະຊຸມຄັ້ງນີ້ດັ່ງນີ້:

I/We hereby authorize the proxy to vote on my/our behalf at this meeting as follows:

☐ ໃຫ້ຜູ້ຕາງໜ້າມີສິດພິຈາລະນາ ແລະລົງມະຕິແທນຂ້າພະເຈົ້າໄດ້ທຸກປະການຕາມທີ່ເຫັນສົມຄວນ;

To grant my/our proxy to consider and vote on my/our behalf as he/she may deem appropriate in all respects;

☐ ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຂ້າພະເຈົ້າແລະມີສິດພິຈາລະນາແລະລົງມະຕິແທນຂ້າພະເຈົ້າໃນບາງວາລະ;

To grant my/our proxy to vote as per my/our intention and consider and vote on my/our behalf in some agendas as he/she may deem appropriate in all respects;

☐ ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຂ້າພະເຈົ້າ.

To grant my/our proxy to vote as per my/our intention

ວາລະທີ 1:	ລາຍງານຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີຜ່ານມາເພື່ອຊາບ.
Agenda No. 1	Result of Resolutions of Previous Annual General Shareholders' Meeting for further onformation.

ວາລະທີ 2:	ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2017, ວັນທີ 06 ເມສາ 2018.
Agenda No. 2	To consider and adopt the Minutes of the Annual General Shareholders' Meeting for the year 2017, held on 06/04/2018.

☐ ເຫັນດີ Approve ☐ ບໍ່ເຫັນດີ Disapprove

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌:www.edlgen.com.la

ວາລະທີ 3: ພິຈາລະນາ ແລະ ຮັບຮອງເອົາການຈ່າຍເງິນປັນຜົນຈາກການດຳເນີນທຸລະກິດ 6 ເດືອນຕົ້ນປີ 2018 ແລະ ລາຍງານການເງິນ 6 ເດືອນຕົ້ນປີ 2018 (01/01/2018-30/06/2018).

Agenda No. 3 To consider and adopt the dividend payment from the business operating result for the first 6-month-period of the year 2018 and the financial statements of the Company for the first 6-month-period of the year 2018 (01/01/2018-30/06/2018).

☐ ເຫັນດີ Approve ☐ ບໍ່ເຫັນດີ Disapprove

ວາລະທີ 4: ພິຈາລະນາ ແລະ ຮັບຮອງບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດ ປີ 2018 ລວມທັງ ລາຍງານ ການເງິນຂອງບໍລິສັດ ປີ 2018 ແລະ ແຜນການດຳເນີນທຸລະກິດຂອງບໍລິສັດ ປີ 2019.

Agenda No.4 To consider and adopt the report on the business operating result of the Company for the year 2018, the financial statements of the Company for the year 2018, and the business plan of the Company for the year 2019.

☐ ເຫັນດີ Approve ☐ ບໍ່ເຫັນດີ Disapprove

ວາລະທີ 5: ພິຈາລະນາ ແລະ ອະນຸມັດການຈ່າຍເງິນປັນຜົນ ຈາກຜົນການດຳເນີນທຸລະກິດ 6 ເດືອນທ້າຍປີ 2018 (01/07/2018 - 31/12/2018).

Agenda No. 5 To consider and approve the dividend payment from the business operating result for the last 6-month-period of the year 2018 (01/07/2018 - 31/12/2018).

☐ ເຫັນດີ Approve ☐ ບໍ່ເຫັນດີ Disapprove

ວາລະທີ 6: ພິຈາລະນາ ແລະ ອະນຸມັດແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ການກຳນົດຄ່າຈ້າງ ຂອງຜູ້ກວດສອບບັນຊີພາຍນອກ ປີ 2019.

Agenda No. 6 To Consider and approve the appointment of the independent auditors and the determination of the remuneration of the independent auditors for the year 2019.

☐ ເຫັນດີ Approve ☐ ບໍ່ເຫັນດີ Disapprove

ວາລະທີ 7: ພິຈາລະນາ ແລະ ອະນຸມັດການລົງທຶນໃນໂຄງການ EDL-Gen Energy Complex Plaza.

Agenda No. 7 . To Consider and approve investment in EDL-Gen Energy Complex Plaza project.

☐ ເຫັນດີ Approve ☐ ບໍ່ເຫັນດີ Disapprove

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປລາວ. ຕູ້ ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌:www.edlgen.com.la

(5) ການລົງຄະແນນສຽງຂອງຜູ້ຕາງໜ້າ ໃນວາລະປະຊຸມໃດທີ່ບໍ່ເປັນໄປຕາມທີ່ລະບຸໄວ້ໃນໃບມອບສັນທະສະບັບນີ້ ໃຫ້ຖືວ່າການລົງຄະແນນສຽງນັ້ນບໍ່ຖືກຕ້ອງ ແລະບໍ່ແມ່ນການລົງຄະແນນສຽງຂອງຂ້າພະເຈົ້າ ໃນຖານະຜູ້ຖືຮຸ້ນ.

Voting of the proxy in any agenda that is not as specified in this Proxy shall be considered as invalid and shall not be my/our voting as a shareholder.

(6) ໃນກໍລະນີທີ່ຂ້າພະເຈົ້າ ບໍ່ໄດ້ລະບຸຄວາມຕ້ອງການໃນການລົງຄະແນນສຽງ ໃນວາລະປະຊຸມໃດໄວ້ ຫຼືລະບຸໄວ້ບໍ່ຈະແຈ້ງໃຫ້ຖືວ່າເຫັນດີ.

In case I/we have not specified my/our voting intention in any agenda or not clearly specified, it shall be deemed approved.

ການກະທຳໃດ ທີ່ຜູ້ຕາງໜ້າໄດ້ກະທຳໄປໃນກອງປະຊຸມ, ເວັ້ນແຕ່ກໍລະນີທີ່ຜູ້ຕາງໜ້າບໍ່ລົງຄະແນນສຽງ ຕາມທີ່ຂ້າພະເຈົ້າລະບຸໃນໃບມອບສັນທະສະບັບນີ້, ໃຫ້ຖືວ່າຂ້າພະເຈົ້າໄດ້ກະທຳເອງທຸກຢ່າງ.

Any business carried out by the proxy at the said meeting, except in case that the proxy does not vote according to my/our intention(s) specified in the Proxy, shall be deemed as having been carried out by myself/ourselves in all respects.

ລົງລາຍເຊັ່ນ/Signed ຜູ້ຖືຮຸ້ນທີ່ມອບໝາຍ/Grantor

(.....)

ລົງລາຍເຊັ່ນ/Signed ຜູ້ຕາງໜ້າ/Proxy

(.....)

<u>ໝາຍເຫດ</u>

1. ຜູ້ຖືຮຸ້ນທີ່ມອບໝາຍຈະຕ້ອງມອບໝາຍໃຫ້ຜູ້ຕາງໜ້າພຽງຜູ້ດຽວເປັນຜູ້ເຂົ້າຮ່ວມປະຊຸມແລະລົງຄະແນນສຽງ, ແລະ ບໍ່ສາມາດແບ່ງແຍກຈຳນວນຮຸ້ນໃຫ້ຜູ້ຕາງໜ້າຫຼາຍຄົນເພື່ອແຍກການລົງຄະແນນສຽງໄດ້.

   The shareholder appointing the proxy must authorize only one proxy to attend and vote at the meeting and may not split the number of shares to several proxies for splitting votes.

2. ກົດໝາຍວ່າດ້ວຍທະບຽນສານ (ສະບັບປັບປຸງ) ເລກທີ 11/ສພຊ, ລົງວັນທີ 26 ພະຈິກ 2009, ເພື່ອເປັນການຮັບປະກັນຄວາມຜູກພັນຂອງຜູ້ມອບໝາຍແລະຜູ້ຕາງໜ້າທາງດ້ານກົດໝາຍ, ດັ່ງນັ້ນໃບມອບສັນທະສະບັບນີ້ຈະຕ້ອງໄດ້ນຳໄປຈົດທະບຽນສານ, ໃນນີ້ບໍລິສັດຈະບໍ່ຮັບຜິດຊອບໃດໆໃນກໍລະນີທີ່ໃບມອບສັນທະສະບັບນີ້ທີ່ຍື່ນຕໍ່ບໍລິສັດບໍ່ໄດ້ຈົດທະບຽນສານ.

   Pursuant to the Law on Notary (Amended) No. 11/NA, dated 26 November 2009, in order for the appointment by the shareholder to the proxy to have legal effect, this Proxy must be registered with the court. In this regard, the Company will not take any responsibility in the case where the Proxy submitted to the Company has not been registered with the court.

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປລາວ. ຕູ້ ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌:www.edlgen.com.la

ເອກະສານ ແລະຫຼັກຖານ ທີ່ຜູ້ເຂົ້າຮ່ວມກອງປະຊຸມຕ້ອງໃຊ້ເພື່ອການສະເໜີໂຕ ໃນການເຂົ້າຮ່ວມກອງປະຊຸມ ການມອບໝາຍ, ການລົງທະບຽນ ແລະການລົງຄະແນນສຽງໃນກອງປະຊຸມຜູ້ຖືຮຸ້ນ

ເພື່ອຄວາມສະດວກໃນການລົງທະບຽນຜູ້ເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2018 ຂອງບໍລິສັດ ເຊີ-ໄຟຟ້າ ລາວ ມະຫາຊົນ, ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າ ທີ່ຈະມາເຂົ້າຮ່ວມກອງປະຊຸມ ກະລຸນານຳໜັງສືເຊີນປະຊຸມ, ໃບແຈ້ງສິດ ແລະ ໃບມອບສັນທະມາພ້ອມ.

<u>ບໍລິສັດ ຂໍສະຫງວນສິດ ໃນການອະນຸຍາດໃຫ້ສະເພາະຜູ້ທີ່ມີເອກະສານຖືກຕ້ອງ ແລະ ຄົບຖ້ວນເທົ່ານັ້ນ ຈຶ່ງສາມາດເຂົ້າຮ່ວມກອງປະຊຸມໄດ້.</u>

1. ເອກະສານ ແລະ ຫຼັກຖານ (ທີ່ຍັງບໍ່ໝົດອາຍຸ) ທີ່ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າ ຈະຕ້ອງໃຊ້ໃນການສະເໜີໂຕ ໃນການເຂົ້າຮ່ວມກອງປະຊຸມ

1.1 <u>ຜູ້ຖືຮຸ້ນທີ່ເປັນບຸກຄົນ</u>

1.1.1 ກໍລະນີຜູ້ຖືຮຸ້ນເຂົ້າຮ່ວມກອງປະຊຸມດ້ວຍຕົນເອງ

ໃຫ້ສະແດງເອກະສານທີ່ທາງພາກລັດອອກໃຫ້ ເຊັ່ນ: ບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ຖືຮຸ້ນທີ່ເປັນຄົນຕ່າງປະເທດ) ແລະ ຫາກມີການປ່ຽນຊື່-ນາມສະກຸນ ໃຫ້ຍື່ນຫຼັກຖານປະກອບພ້ອມ.

1.1.2 ກໍລະນີຜູ້ຖືຮຸ້ນມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມແທນ ໃຫ້ແຈ້ງເອກະສານດັ່ງລຸ່ມນີ້:

(1) ໃບມອບສັນທະ ຕາມແບບຟອມທີ່ຄັດຕິດມາພ້ອມໜັງສືເຊີນປະຊຸມ ຊຶ່ງໄດ້ມີການປະກອບຂໍ້ຄວາມຖືກຕ້ອງຄົບຖ້ວນ ແລະ ລົງລາຍເຊັນພ້ອມຂຽນຊື່ແຈ້ງໂດຍຜູ້ຖືຮຸ້ນທີ່ມອບໝາຍ ແລະ ຜູ້ຕາງໜ້າ.

(2) ສຳເນົາເອກະສານທີ່ທາງພາກລັດອອກໃຫ້ຂອງຜູ້ຖືຮຸ້ນທີ່ມອບໝາຍ ຕາມຂໍ້ 1.1.1 ຊຶ່ງໄດ້ລົງລາຍເຊັນຮັບຮອງສຳເນົາຖືກຕ້ອງໂດຍຜູ້ຖືຮຸ້ນທີ່ມອບໝາຍ.

(3) ເອກະສານທີ່ທາງພາກລັດອອກໃຫ້ຂອງຜູ້ຕາງໜ້າ ເຊັ່ນ: ບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ຕາງໜ້າທີ່ເປັນຄົນຕ່າງປະເທດ) ແລະ ຫາກມີການປ່ຽນຊື່-ນາມສະກຸນ ໃຫ້ຍື່ນຫຼັກຖານປະກອບພ້ອມ.

1.2 <u>ຜູ້ຖືຮຸ້ນທີ່ເປັນນິຕິບຸກຄົນ</u>

1.2.1 ກໍລະນີຕົວແທນຂອງຜູ້ຖືຮຸ້ນ (ຜູ້ອຳນວຍການ) ເຂົ້າຮ່ວມກອງປະຊຸມດ້ວຍຕົນເອງ ໃຫ້ແຈ້ງເອກະສານດັ່ງລຸ່ມນີ້:

(1) ເອກະສານທີ່ທາງພາກລັດອອກໃຫ້ຂອງຕົວແທນຂອງນິຕິບຸກຄົນ (ຜູ້ອຳນວຍການ) ເຊັ່ນ: ບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຕົວແທນຂອງນິຕິບຸກຄົນ (ຜູ້ອຳນວຍການ) ທີ່ເປັນຄົນຕ່າງປະເທດ) ແລະ ຫາກມີການປ່ຽນຊື່-ນາມສະກຸນ ໃຫ້ຍື່ນຫຼັກຖານປະກອບພ້ອມ.

(2) ສຳເນົາໃບອະນຸຍາດລົງທຶນຕ່າງປະເທດ (ຖ້າມີ), ໃບທະບຽນວິສາຫະກິດ, ກົດລະບຽບບໍລິສັດ ແລະ ໃບທະບຽນອາກອນ (ປັຊຈຸບັນ) ຂອງຜູ້ຖືຮຸ້ນທີ່ເປັນນິຕິບຸກຄົນດັ່ງກ່າວ ທີ່ມີຂໍ້ຄວາມສະແດງໃຫ້ເຫັນວ່າ ຕົວແທນຂອງນິຕິບຸກຄົນທີ່ເຂົ້າຮ່ວມກອງປະຊຸມ ມີອຳນາດດຳເນີນການແທນນິຕິ ບຸກຄົນທີ່ເປັນຜູ້ຖືຮຸ້ນ ຊຶ່ງໄດ້ລົງລາຍເຊັນຮັບຮອງສຳເນົາຖືກຕ້ອງ ໂດຍຕົວແທນຂອງນິຕິບຸກຄົນ (ຜູ້ອຳນວຍການ).

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌:www.edlgen.com.la

1.2.2 ກໍລະນີຜູ້ຖືຮຸ້ນມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມແທນ ໃຫ້ແຈ້ງເອກະສານດັ່ງລຸ່ມນີ້:

(1) ໃບມອບສັນທະ ຕາມແບບຟອມທີ່ຄັດຕິດມາພ້ອມໜັງສືເຊີນປະຊຸມ ຊຶ່ງໄດ້ມີການປະກອບຂໍ້ຄວາມຖືກຕ້ອງຄົບຖ້ວນ ແລະ ລົງລາຍເຊັນພ້ອມຂຽນຊື່ແຈ້ງໂດຍຜູ້ຖືຮຸ້ນທີ່ມອບໝາຍ ແລະ ຜູ້ຕາງໜ້າ.

(2) ສຳເນົາໃບອະນຸຍາດລົງທຶນຕ່າງປະເທດ (ຖ້າມີ), ໃບທະບຽນວິສາຫະກິດ, ກົດລະບຽບບໍລິສັດ ແລະ ໃບທະບຽນອາກອນ (ປີສຸດທ້າຍ) ຂອງຜູ້ຖືຮຸ້ນທີ່ເປັນນິຕິບຸກຄົນດັ່ງກ່າວ ທີ່ມີຂໍ້ຄວາມສະແດງໃຫ້ເຫັນວ່າ ຕົວແທນຂອງນິຕິບຸກຄົນມີອຳນາດດຳເນີນການແທນນິຕິບຸກຄົນທີ່ເປັນຜູ້ຖືຮຸ້ນ ຊຶ່ງໄດ້ລົງລາຍເຊັນຮັບຮອງສຳເນົາຖືກຕ້ອງໂດຍຕົວແທນຂອງນິຕິບຸກຄົນ (ຜູ້ອຳນວຍການ).

(3) ສຳເນົາເອກະສານທີ່ທາງພາກລັດອອກໃຫ້ຂອງຕົວແທນຂອງນິຕິບຸກຄົນ (ຜູ້ອຳນວຍການ) ຕາມຂໍ້1.2.1(1) ຊຶ່ງໄດ້ລົງລາຍເຊັນຮັບຮອງສຳເນົາຖືກຕ້ອງໂດຍຕົວແທນຂອງນິຕິບຸກຄົນ (ຜູ້ອຳ ນວຍການ).

(4) ເອກະສານທີ່ທາງພາກລັດອອກໃຫ້ຂອງຜູ້ຕາງໜ້າ ເຊັ່ນ: ບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ຕາງໜ້າທີ່ເປັນຄົນຕ່າງປະເທດ) ແລະ ຫາກມີການປ່ຽນຊື່-ນາມສະກຸນ ໃຫ້ຍື່ນຫຼັກຖານປະກອບພ້ອມ.

1.2.3 ກໍລະນີຜູ້ຖືຮຸ້ນເປັນນິຕິບຸກຄົນຕ່າງປະເທດ

(1) ໃຫ້ປະຕິບັດຕາມຂໍ້ 1.2.1 ຫຼື 1.2.2 ແລ້ວແຕ່ກໍລະນີ.

(2) ເອກະສານຂອງນິຕິບຸກຄົນຕ່າງປະເທດຕ້ອງໄດ້ແປເປັນພາສາລາວ ຫຼື ພາສາອັງກິດ ແລະ ໃຫ້ຕົວແທນຂອງນິຕິບຸກຄົນດັ່ງກ່າວລົງລາຍເຊັນຮັບຮອງສະບັບແປເປັນພາສາດັ່ງກ່າວ.

2. ການມອບໝາຍ

ຜູ້ຖືຮຸ້ນທີ່ບໍ່ສາມາດເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນຂອງບໍລິສັດໄດ້ດ້ວຍຕົນເອງ ສາມາດມອບໝາຍໃຫ້ຜູ້ຕາງໜ້າ ເຂົ້າຮ່ວມກອງປະຊຸມແທນໄດ້ ໂດຍດຳເນີນການດັ່ງນີ້:

2.1 ມອບໝາຍໃຫ້ຜູ້ໃດໜຶ່ງຕາມຄວາມຕ້ອງການຂອງຜູ້ຖືຮຸ້ນ ຫຼື ເລືອກມອບສິດໃຫ້ຜູ້ອຳນວຍການຂອງບໍລິສັດຜູ້ໃດໜຶ່ງ ໂດຍໃຫ້ລະບຸຊື່ພ້ອມລາຍລະອຽດຂອງບຸກຄົນທີ່ຜູ້ຖືຮຸ້ນຕ້ອງການຈະມອບໝາຍ ຫຼື ການເຄື່ອງໝາຍ (✓) ລົງໃນຊ່ອງ ☐ ໜ້າຊື່ຜູ້ອຳນວຍການ ຕາມທີ່ລະບຸໄວ້ໃນໃບມອບສັນທະ ໂດຍເລືອກພຽງຜູ້ດຽວໃຫ້ເປັນຜູ້ຮັບມອບໝາຍໃນການເຂົ້າຮ່ວມກອງປະຊຸມດັ່ງກ່າວ.

2.2 ນຳສົ່ງໃບມອບສັນທະຄືນ ພະແນກເລຂານຸການບໍລິສັດ ກ່ອນວັນທີ **09 ເມສາ 2019** ຫຼື ກ່ອນເວລາເປີດກອງປະຊຸມຢ່າງໜ້ອຍໜຶ່ງຊົ່ວໂມງ ເພື່ອໃຫ້ເຈົ້າໜ້າທີ່ຂອງບໍລິສັດໄດ້ມີເວລາກວດກາເອກະສານ ເພື່ອໃຫ້ທັນເວລາເປີດກອງປະຊຸມ.

ໃນນີ້, ຜູ້ຖືຮຸ້ນບໍ່ສາມາດແບ່ງແຍກຈຳນວນຮຸ້ນໂດຍມອບໝາຍໃຫ້ຜູ້ຕາງໜ້າຫຼາຍຄົນ ເພື່ອແບ່ງການລົງຄະແນນສຽງໄດ້ ແລະຜູ້ຖືຮຸ້ນຈະຕ້ອງມອບໝາຍເທົ່າກັບຈຳນວນຮຸ້ນທີ່ຕົນຖືຢູ່ເທົ່ານັ້ນ ໂດຍບໍ່ສາມາດມອບໝາຍພຽງບາງສ່ວນໜ້ອຍກວ່າຈຳນວນທີ່ຕົນຖືຢູ່ໄດ້.

3. ການລົງທະບຽນ

ບໍລິສັດຈະເລີ່ມເປີດຮັບລົງທະບຽນຜູ້ເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2018 ຂອງ ບໍລິສັດ ເຊລິດ-ໄຟຟ້າລາວ ມະຫາຊົນ ກ່ອນເປີດກອງປະຊຸມ 2 ຊົ່ວໂມງ ຫຼື ຕັ້ງແຕ່ເວລາ 13:00-15:00 ໂມງ ເປັນຕົ້ນໄປ ໃນວັນທີ **09 ເມສາ 2019** ທີ່

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌:www.edlgen.com.la

ຫ້ອງປະຊຸມຊັ້ນ 1 ອາຄານສຳນັກງານລັດວິສາຫະກິດໄຟຟ້າລາວ ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫລວງວຽງຈັນ ຕາມແຜນທີ່ຄັດຕິດມາພ້ອມນີ້.

ໃນນີ້, ໃນແຕ່ລະວາລະປະຊຸມ ກ່ອນເລີ້ມການລົງຄະແນນ ບໍລິສັດຈະປິດຮັບລົງທະບຽນເປັນການຊົ່ວຄາວ ແລະຈະເປີດຮັບລົງທະບຽນອີກເມື່ອການນັບຄະແນນຂອງແຕ່ລະວາລະປະຊຸມສຳເລັດ.

4. ການລົງຄະແນນສຽງໃນກອງປະຊຸມສາມັນຜູ້ຖືຮຸ້ນ

4.1 ຫຼັກການລົງຄະແນນສຽງ

(1) ໜຶ່ງຮຸ້ນເທົ່າກັບ ໜຶ່ງສຽງ ແລະຜູ້ຖືຮຸ້ນຈະຕ້ອງລົງຄະແນນສຽງເທົ່າກັບຈຳນວນຮຸ້ນທີ່ຕົນຖືຢູ່ເທົ່ານັ້ນ.

(2) ບໍລິສັດຈະຈັດໃຫ້ມີບັດລົງຄະແນນ (Ballots) ສຳຫຼັບທຸກໆ ວາລະປະຊຸມ ທີ່ຕ້ອງມີການລົງຄະແນນສຽງ ໂດຍບໍລິສັດຈະແຈກບັດລົງຄະແນນໃຫ້ຜູ້ຖືຮຸ້ນ ແລະ ຜູ້ຕາງໜ້າທຸກຄົນ ໃນເວລາທີ່ລົງທະບຽນ, **ຍົກເວັ້ນ** ສຳລັບຜູ້ຕາງໜ້າ ຊຶ່ງຜູ້ຖືຮຸ້ນທີ່ມອບໝາຍໄດ້ລະບຸການລົງຄະແນນສຽງມາໃນໃບມອບສັນທະຢ່າງຈະແຈ້ງແລ້ວ ບໍລິສັດຈະບໍ່ແຈກບັດລົງຄະແນນໃຫ້ແກ່ຜູ້ຕາງໜ້າດັ່ງກ່າວ, ໃນນີ້ ຜູ້ທີ່ມາລົງທະບຽນຫຼັງຈາກເວລາທີ່ກອງປະຊຸມຜູ້ຖືຮຸ້ນໄດ້ເປີດກອງປະຊຸມ ໄປຕາມລະບຽບວາລະປະຊຸມບາງສ່ວນແລ້ວ, ຈະໄດ້ຮັບບັດລົງຄະ ແນນສະເພາະວາລະປະຊຸມທີ່ເຫຼືອຢູ່ເທົ່ານັ້ນ.

4.2 ວິທີປະຕິບັດໃນການລົງຄະແນນສຽງໃນແຕ່ລະວາລະປະຊຸມ

ໃນການລົງຄະແນນສຽງໃນແຕ່ລະວາລະປະຊຸມ ເພື່ອບໍ່ໃຫ້ເປັນການເສຍເວລາຂອງຜູ້ຖືຮຸ້ນ ແລະ ຜູ້ຕາງໜ້າທັງໝົດ, ປະທານໃນກອງປະຊຸມຈະຖາມວ່າ ມີຜູ້ໃດບໍ່ເຫັນດີ ຫຼືບໍ່ ຜູ້ທີ່ເຫັນດີບໍ່ຕ້ອງການເຄື່ອງໝາຍໃດໆ ລົງໃນບັດລົງຄະແນນ (Ballots) ສ່ວນຜູ້ທີ່ບໍ່ເຫັນດີກັບວາລະປະຊຸມດັ່ງກ່າວ ໃຫ້ການເຄື່ອງໝາຍ (✓) ລົງໃນຊ່ອງ □ ບໍ່ເຫັນດີ ໃນບັດລົງຄະແນນ ພ້ອມລົງລາຍເຊັນໃນບັດລົງຄະແນນ ແລະ ຍົກມືຂຶ້ນ ເພື່ອສົ່ງມອບໃຫ້ແກ່ເຈົ້າໜ້າທີ່ຂອງບໍລິສັດ ເພື່ອນຳໄປກວດນັບ, ຍົກເວັ້ນ ສຳລັບຜູ້ຕາງໜ້າ ຊຶ່ງຜູ້ຖືຮຸ້ນທີ່ມອບໝາຍໄດ້ລະບຸການລົງຄະແນນສຽງມາໃນໃບມອບສັນທະຢ່າງຈະແຈ້ງແລ້ວ ບໍລິສັດຈະບັນທຶກຄະແນນສຽງດັ່ງກ່າວ ຕັ້ງແຕ່ເວລາທີ່ຜູ້ຕາງໜ້າລົງທະບຽນເຂົ້າຮ່ວມກອງປະຊຸມ.

ໃນນີ້, ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າ ທີ່ສົ່ງບັດລົງຄະແນນບໍ່ເຫັນດີ ພາຍຫຼັງຈາກທີ່ປະທານໄດ້ປະກາດໃຫ້ກອງປະຊຸມຊາບຜົນການລົງຄະແນນສຽງ ໃນແຕ່ລະວາລະປະຊຸມສິ້ນສຸດລົງແລ້ວ, ບໍລິສັດຈະບໍ່ນຳເອົາຄະແນນສຽງດັ່ງກ່າວມາລວມ ເປັນຄະແນນສຽງອີກ.

4.3 ການນັບຄະແນນສຽງ ແລະ ການແຈ້ງຜົນການນັບຄະແນນ


ຜູ້ອຳນວຍການໃຫຍ່ຂອງບໍລິສັດ ຈະເປັນຜູ້ອະທິບາຍວິທີການນັບຄະແນນສຽງ ໃຫ້ກອງປະຊຸມຮັບຊາບກ່ອນເລີ້ມວາລະປະຊຸມ ໂດຍບໍລິສັດຈະນັບຄະແນນສຽງ ແລະ ແຈ້ງຜົນການນັບຄະແນນໃຫ້ກອງປະ ຊຸມຮັບຊາບກ່ອນສິ້ນສຸດການປະຊຸມໃນແຕ່ລະວາລະ.

ໃນນີ້, ບໍລິສັດ ຈະໃຊ້ວິທີຫັກຄະແນນສຽງທີ່ບໍ່ເຫັນດີອອກຈາກຈຳນວນສຽງທັງໝົດ ແລະ ສ່ວນທີ່ເຫຼືອຈະຖືເປັນຄະແນນສຽງທີ່ເຫັນດີ.

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌:www.edlgen.com.la

ແຜນທີ່ ຂອງສະຖານທີ່ຈັດກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2018

Map of the Meeting Place



ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປລາວ. ຕູ້ ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌:www.edlgen.com.la